

# ດອກໄມ້ ທີ່ເປັນເອກະລັກຂອງຊາດ ແລະ ຊາວພຸດລາວ

ຂຽນໂດຍ ຮສ. ມະນີຈັນ ໄຊຍະວົງ

ແຕ້ມຮູບ ກິງເງິນ ແສງດີ

**Pha Tad Ke Botanical Garden - Luang Prabang**

# ດອກໄມ້ ທີ່ເປັນເອກະລັກຂອງຊາດ ແລະ ຊາວພຸດລາວ

*ຂຽນໂດຍ* **ຮສ. ມະນີຈັນ ໄຊຍະວົງ**

*ແຕ້ມຮູບ* **ກົງເງິນ ແສງດີ**

**Assoc. Prof. Manichanh Sayavong**

***Drawings by* Kongngern Sengdee**



**Pha Tad Ke Botanical Garden - Luang Prabang - 2012**



## ຄຳນຳ

ຊາດລາວເຮົາ ມີຮີດຄອງປະເພນີອັນດີງາມ ສືບເນື່ອງກັນມາຕັ້ງແຕ່ບູຮານນະການ ແລະ ຊາວລາວເຮົາ ສ່ວນໃຫຍ່ກໍເປັນຊາວພຸດ ນັບຖືເອົາພະທຳຄຳສອນຂອງພະສຳມາສຳພຸດທະເຈົ້າ ເປັນສິນທຳປະຈຳໃຈ ໃນການໃຊ້ຊີວິດຢູ່ຮ່ວມກັນ ເພື່ອກໍ່ໃຫ້ເກີດຄວາມສາມັກຄີ ຄວາມຮັກຊາດ ແພງເຊື້ອ, ມີຄວາມເມດຕາກະລຸນາເພື່ອກໍ່ໃຫ້ ເກີດຄວາມສະຫງົບສຸກ ບໍ່ຮຸກຮານ ຫຼື ບຽດບຽນເຊິ່ງກັນ ແລະ ກັນ, ມີຄວາມດຸໝັ່ນ ຂະຫຍັນພຽນ ຊື່ສັດ ໃນການປະກອບອາຊີບ, ມີຮີດສິບສອງຄອງສິບສີ່ ໃຫ້ຍຶດຖືເປັນຫຼັກປະຕິບັດສືບຕໍ່ກັນມາຕັ້ງແຕ່ບູຮານ ຈົນເຖິງເທົ້າທຸກວັນນີ້. ຮີດສິບສອງຄອງສິບສີ່ ກໍປຽບເໝືອນເປັນກົດລະບຽບ ຫຼື ກົດໝາຍອັນໜຶ່ງ ທີ່ຊາວພຸດທັງຫຼາຍ ລວມເຖິງ ຊາວລາວທີ່ຖືສາສະໜາພຸດ ຍຶດຖືເປັນຫຼັກປະຕິບັດຄວບຄຸມຄວາມປະພຶດໃນການຢູ່ຮ່ວມກັນໃນສັງຄົມ ຢ່າງມີໄມຕີຈິດມິດຕະພາບອັນດີງາມຕໍ່ກັນ. ຄວາມປະພຶດ ທີ່ຮຽບຮ້ອຍຈົບງາມ ແລະ ມີສິນທຳປະຈຳໃຈ ເປັນປັດໃຈທີ່ສຳຄັນທີ່ກໍ່ໃຫ້ເກີດ ວັດທະນະທຳອັນດີງາມປະຈຳຊາດ. ໃນທາງສາສະໜາ ຢູ່ໃນລາວມີວັນທີ່ເປັນເຫດການສຳຄັນຕ່າງໆ ເຊິ່ງໝາຍເຖິງຮີດສິບສອງ ທີ່ຊາວລາວເຮົາໄດ້ປະຕິບັດສືບເນື່ອງມາ ເຊັ່ນ: ວັນບຸນຄູນກອງເຂົ້າ, ບຸນປີໃໝ່ລາວ, ບຸນວິສາຂະບູຊາ, ບຸນມາຄະບູຊາ, ລ້ຽງຫໍເຈົ້າບ້ານ, ບຸນບັ້ງໄຟ, ບຸນພະເຫວດ, ບຸນເຂົ້າພັນສາ ແລະ ອອກພັນສາ, ບຸນຫໍ່ເຂົ້າ ປະດັບດິນ, ບຸນຫໍ່ເຂົ້າສະຫຼາກ ແລະ ອື່ນໆ ຂຶ້ນຕາມແຕ່ລະທ້ອງຖິ່ນ. ເຫດການສຳຄັນ ຈຳນວນໜຶ່ງ ຈະໄດ້ຍົກຂຶ້ນມາພັນລະນາໃນໜັງສືເຫຼັ້ມນີ້ ເພື່ອໃຫ້ເຫັນໄດ້ຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດລາວເຮົາ ເຊິ່ງເປັນສິ່ງທີ່ເກ້ຍກ່ອມໃຫ້ຄົນທັງຊາດ ໂດຍສະເພາະ ຄົນລຸ້ນຫຼັງໄດ້ພູມໃຈ, ເຊີດຊູກຽດຢ່າງສົມສັກສີ ແລະ ປະຕິບັດສືບຕໍ່ໆກັນໄປ. ໃນເຫດການສຳຄັນໆນີ້ ຊາວລາວເຮົາໄດ້ນຳໃຊ້ດອກໄມ້ຫຼາກຫຼາຍຊະນິດ ເຊິ່ງອາດແຕກຕ່າງກັນໄປຕາມແຕ່ລະທ້ອງຖິ່ນ ແລະ ຕາມສະໄໝ ເຊິ່ງຜູ້ຂຽນໄດ້ພະຍາຍາມຮິບໂຮມ. ນອກຈາກນັ້ນ ກໍ່ຈະໄດ້ກ່າວເຖິງສິ່ງທີ່ເປັນສັນຍາລັກ ຫຼື ເອກະລັກທີ່ພົວພັນກັບສາສະໜາພຸດ ແລະ ເປັນເອກະລັກຂອງຊາດລາວເຮົາ. ຜູ້ຮຽບຮຽງ ຫວັງວ່າໜັງສືເຫຼັ້ມນີ້ ຈະເປັນປະໂຫຍດພໍສົມຄວນໃນຄວາມເຂົ້າໃຈຕໍ່ກັບຮີດຄອງປະເພນີອັນດີງາມຂອງຊາດລາວເຮົາ ໂດຍສະເພາະ ຄົນລຸ້ນຫຼັງ ນອກຈາກຈະມີຄວາມເຂົ້າໃຈແລ້ວຍັງຈະເຫັນໄດ້ເຖິງບາງວິທີປະຕິບັດ ການທ້າງຫາກະກຽມໃສ່ວັນສຳຄັນຕ່າງໆ ເຫຼົ່ານັ້ນດ້ວຍ.

## ດອກຈຳປາ-ດອກໄມ້ປະຈຳຊາດລາວ

ດອກໄມ້ຢູ່ໃນແຕ່ລະປະເທດມີຫຼາກຫຼາຍຊະນິດ ແຕ່ມີພຽງດອກໄມ້ຊະນິດໃດໜຶ່ງ ເທົ່ານັ້ນ ທີ່ບາງປະເທດຖືວ່າເປັນດອກໄມ້ປະຈຳຊາດຂອງຕົນເອງ ຫຼື ເປັນສັນຍາລັກຂອງຊາດ. ປະເທດລາວ ກໍໄດ້ຖືເອົາດອກຈຳປາ ເປັນສັນຍາລັກ ຫຼື ເປັນດອກໄມ້ປະຈຳຊາດ ດັ່ງທີ່ ພວກເຮົາ ເຄີຍໄດ້ຍິນ ແລະ ໄດ້ຮ້ອງເພັງ "ດອກຈຳປາ" ມາໄດ້ຫຼາຍທົດສະວັດແລ້ວ, ເນື້ອໃນບາງຕອນ ກໍໄດ້ບົ່ງບອກ ສັນຍາລັກ ດັ່ງກ່າວມານີ້ແທ້:

ໂອ ດວງຈຳປາ　　　　ບຸບຜາເມືອງລາວ
ງາມດັ່ງດວງດາວ　　　ຊາວລາວເພິ່ງໃຈ
ເກີດຢູ່ພາຍໃນ　　　　ແດນດິນລ້ານຊ້າງ ...

ດອກຈຳປາ ມີຊື່ ວິທະຍາສາດວ່າ "Plumeria rubra", ຊື່ທົ່ວໄປ ເປັນພາສາອັງກິດ Frangipanii tree, Temple tree, West Indian Jasmine ເຊິ່ງມີຕົ້ນກຳເນີດມາຈາກເຂດຮ້ອນຂອງທະວີບອະເມລິກາ ດັ່ງ ອະເມລິກາ ພາກກາງນັ້ນເອງທີ່ກວມເອົາປະເທດ ແມກຊີໂກນຳດ້ວຍ.

ໃນປະເທດລາວເຮົາ ດອກຈຳປາ ເປັນດອກໄມ້ ທີ່ພົບເຫັນແຕ່ເໜືອຕະຫຼອດໃຕ້ ຄືຕັ້ງແຕ່ແຂວງ ຜົ້ງສາລີ ຈົນມາຮອດ ແຂວງຈຳປາສັກ. ດອກຈຳປາ ມີລຳຕົ້ນສູງປະມານ 6-12 ແມັດ, ແຕກກິ່ງງ່າ ຄົດໂງ ພໍສົມຄວນ, ທຸກສ່ວນມີນ້ຳຢາງສີຂາວ, ດອກ ມີລັກສະນະເປັນຊໍ່ໃຫຍ່ ເຕົ້າໂຮມກັນຢູ່ທີ່ປາຍກິ່ງ, ດອກເປັນຮູບຈອຍ, ປາຍແຍກເປັນ 5 ກີບ ເຊິ່ງແຕ່ລະກີບເອີ້ນວ່າ ກີບດອກ, ແຕ່ລະກີບດອກຊ້ອນເຫຼື່ອມກັນ, ມີຫຼາຍສີໃນດອກດຽວກັນ ເຊັ່ນ ສີຂາວ ເຊິ່ງເພິ່ນມັກເຫັນຢູ່ແຄມດ້ານນອກຂອງກີບດອກ, ຖັດເຂົ້າໄປຂ້າງໃນຂອງກີບດອກ ມີລັກສະນະເປັນສີເຫຼືອງ ແລະເຫຼືອງເຂັ້ມ ເມື່ອລົງຮອດໃຈກາງຂອງດອກ. ຢູ່ພື້ນຂອງກີບດອກ ພົບວ່າມີສີແດງ, ສີບົວ ແຊກຢູ່ກັບສີຂາວ. ດອກມີກິ່ນຫອມ ແບບທຳມະຊາດ ຕະລອດທັງວັນ, ບໍ່ຫຼຽວງ່າຍ, ເລີ້ມອອກດອກ ກ່ອນປີໃໝ່ລາວ ແລະ ໂດຍທົ່ວໄປ ດອກອອກກ່ອນໃບ. ນອກຈາກນັ້ນ ຍັງເປັນພືດ ທີ່ບໍ່ມັກເປັນພະຍາດ ແລະ ບໍ່ຄ່ອຍມີມອດ ແມງມາລົບກວນ. ບາງຄັ້ງ ຜູ້ຄົນຫຼົງດອກລັ່ນທົມ ເຊິ່ງມີຊື່ວິທະຍາສາດວ່າ "Plumeria obtusa" ເປັນດອກຈຳປາ ເພາະໃນຕົວຈິງ ຕົ້ນດອກໄມ້ສອງຊະນິດນີ້ກໍມີລັກສະນະໄກ້ຄຽງກັນຫຼາຍ ແຕ່ຖ້າສັງເກດຄັກໆ ກໍພໍຈຳແນກໄດ້ ດັ່ງ ຕົ້ນດອກລັ່ນທົມ ມີໃບແຜ່ກວ້າງ



ຮູບ 1: ຕົ້ນດອກຈຳປາ

ຢູ່ສ່ວນປາຍຫຼາຍກວ່າສ່ວນກົກຂອງແຜ່ນໃບ (ຮູບໄຂ່ປີ້ນ) ແລະ ອອກສີຂຽວເຂັ້ມ, ແຜ່ນໃບເຫຼື້ອມ. ກີບດອກລັ່ນທົມ ອອກສີຂາວຈະແຈ້ງ ກວ່າດອກຈຳປາ, ກີບດອກບໍ່ຊ້ອນເຫຼື່ອມກັນ, ທັງດອກກໍ່ໃຫຍ່ກວ່າ ແລະ ປາຍກີບດອກແອນ ແລະ ໂກບເຂົ້າຫາຕົນດອກເຫັນຢ່າງແຈ່ມແຈ້ງ. ໃນທ້ອງຕະຫຼາດ ກໍມີການພັດທະນາຫາພັນປະສົມໄປເລື້ອຍໆເຮັດໃຫ້ຜູ້ຄົນສັບສົນໄປຕາມໆກັນ. ເພິ່ນນິຍົມປູກດອກຈຳປາ ໄວ້ເປັນດອກໄມ້ປະດັບຕາມສະຖານທີ່ສາທະລະນະຕ່າງໆ ເຊັ່ນ ຢູ່ຕາມວັດວາອາຮາມ, ດັ່ງ ໃນກໍລະນີຢູ່ຕາມເດີ່ນຂອງ ວັດພູ ແຂວງຈຳປາສັກ; ໃນໄລຍະໃໝ່ ກໍໄດ້ມີການນິຍົມປູກຕາມແຄມຖະໜົນ ຫົນທາງ ແລະ ສະຖານທີ່ລັດຖະການ ອີກດ້ວຍ. ການປູກຕົ້ນດອກຈຳປາເປັນພືດປະດັບໃນເດີ່ນບ້ານເດີ່ນສວນຂອງຊາວລາວ ໄດ້ຮັບຄວາມນິຍົມຫຼາຍຂຶ້ນອັນເຮັດໃຫ້ພັນດອກຈຳປາປຸງແຕ່ງ ຫຼື ພັນຊອດ ຂະຫຍາຍຕົວຫຼາຍຂຶ້ນໃນຊຸມທົດສະວັດຫຼັງມານີ້.

ນັບແຕ່ ບູຮານນະການມາ ຊາວລາວທັງຫຼາຍ ນຳໃຊ້ດອກຈຳປາ ປະສົມກັບນ້ຳຫອມເພື່ອສົງພະ ໃນໂອກາດປີໃໝ່ລາວ, ໃຊ້ປະດັບປະດາພາຂວັນ, ຮ້ອຍ ຫຼື ແຊມໃສ່ເກົ້າຜົມ ໃນເວລາມີງານສະແດງສິນລະປະ ໂດຍສະເພາະ ແມ່ນການຟ້ອນ "ດອກຈຳປາ" ຢູ່ຕາມພິທີທາງການຕ່າງໆ ເຊັ່ນ ໃນພິທີຮັບແຂກບ້ານ ແຂກເມືອງ, ໃນໂຮງຮຽນ ຫຼື ບ່ອນອື່ນໆ, ຮ້ອຍເປັນ-ພວງມາໄລ ເພື່ອນຳມາຄ້ອງຄໍໃຫ້ແກ່ແຂກບ້ານແຂກເມືອງ ທີ່ມາຢ້ຽມຢາມ, ຄ້ອງຄໍໃຫ້ແກ່ເຈົ້າສາວ ເພື່ອຈອງເປັນຄູ່ຟ້ອນລຳວົງຕາມງານ ບຸນປະເພນີຕ່າງໆ. ນອກຈາກນັ້ນ ດອກຈຳປາ ຍັງຖືກນຳໃຊ້ເປັນສະໝູນໄພເຊັ່ນວ່າ ຝັກ ຖືກນຳໃຊ້ ຝົນທາແກ້ລິດສະດວງທວານໜັກ. ເປືອກຂອງຕົ້ນ ໃຊ້ປະສົມກັບນ້ຳໝາກພ້າວ, ກັບນ້ຳນົມເຂົ້າ ເພື່ອແກ້ອາການຖອກທ້ອງ, ຂັບຖ່າຍປັດສະວະ ແລະປະຈຳເດືອນ, ແກ້ອາການໄຂ້. ດອກ ມີລົດຂົມ ໃຊ້ປະສົມໃບພູ ກິນແກ້ໄຂ້ມາລາເລຍ. ສ່ວນຮາກ ມີລົດຂົມ ເປັນຢາຖ່າຍ ແກ້ໂລກໜອງໃນ, ໂລກໄຂ່ຂໍ້ອັກເສບ ແລະ ຂັບລົມດັ່ງນີ້ເປັນຕົ້ນ.



ຮູບ 2: ດອກຈຳປາ ແລະ ໃບ



## ສັນຍາລັກ ຂອງຊາວພຸດ

ຕົ້ນດອກບົວຫຼວງ ມີຊື່ ວິທະຍາສາດ ວ່າ "Nelumbo nucifera", ຊື່ທົ່ວໄປເປັນພາສາອັງກິດ ແມ່ນ Lotus, Sacred Lotus, Indian Lotus, ເປັນດອກໄມ້ທີ່ມີຄວາມສຳຄັນ ທາງສາສະໜາຊະນິດໜຶ່ງ ເຊິ່ງເປັນທີ່ຮູ້ຈັກກັນດີ ໃນຊຸມຊົນຊາວພຸດ ແລະ ມີຄວາມສວຍງາມ ທາງດ້ານຮູບຮ່າງ ລັກສະນະ, ສີສັນ, ມີສະເໜ່, ໜ້າຊື່ນຊົມ ແລະ ໜ້າຖະໜຸຖະໜອມ ຢູ່ໃນເຂດເອເຊຍ ມາໄດ້ຫຼາຍສັດຕະວັດແລ້ວ. ປະຊາຊົນຊາວພຸດ ຖືວ່າດອກບົວຫຼວງ ເປັນດອກໄມ້ ທີ່ໃຊ້ສຳລັບບູຊາ ມາເປັນເວລານານກ່ວາ 5000 ປີມາແລ້ວ ແລະ ນອກນັ້ນ ຍັງນຳໃຊ້ເປັນ ພືດປະດັບ, ໃຊ້ເປັນຢາພື້ນເມືອງ ແລະ ເປັນອາຫານ ອີກດ້ວຍ. ຕົ້ນບົວຫຼວງ ເປັນພືດທີ່ເກີດຂຶ້ນຢູ່ໃນບໍ່ນ້ຳຕື້ນ, ໜອງນ້ຳ, ສະນ້ຳ ແລະ ວັງນ້ຳ ເຊິ່ງມີຮາກຢັ່ງລົງໃນຕົມ, ຕົ້ນມີຄວາມແຂງແຮງ ສາມາດຊູດອກ ໃຫ້ພົ້ນ ຈາກໜ້ານ້ຳໄດ້ 8-12 ນິ້ວ (ປະມານ 30 ຊມ). ດອກ ມີກິ່ນອັນຫອມຫວນ ໂດຍສະເພາະຍາມເຊົ້າ. ລະດູອອກດອກ ແມ່ນ ຕະຫຼອດທັງປີ. ດອກຈະບານໃນຕອນເຊົ້າ ເມື່ອບ່າຍໆຫາຄ່ຳ ກີບດອກກໍຈະຕົກຫຼົ່ນອອກ. ສີສັນ, ຮູບຮ່າງ ແລະ ກີບດອກຈຳນວນຫຼາຍຈັດເປັນຫຼາຍໆຊັ້ນເຮັດໃຫ້ດອກບົວຫຼວງມີຄວາມສະຫງ່າເໜືອດອກໄມ້ຊະນິດອື່ນໃດໝົດ. ນອກນັ້ນ ກີບດອກບໍ່ພັບຄືນຫຼັງໃນເວລາເບັ່ງບານ ເຊິ່ງໝາຍເຖິງ ການພັດທະນາ ທາງດ້ານຈິດໃຈ. ດອກ ມີ ສີບົວ ຫຼື ສີຂາວ. ດອກສີບົວໝາຍເຖິງດອກໄມ້ທີ່ວິເສດສຸດສຳລັບ ບູຊາເທບພະເຈົ້າ ແລະ ພົວພັນກັບພະພຸດທະເຈົ້າ. ດອກສີຂາວ ສະແດງເຖິງຈິດວິນຍານທີ່ສົມບູນ ແລະ ຄວາມບໍລິສຸດຂອງຈິດໃຈ. ດອກຈະວິວັດເປັນໝາກ ເຊິ່ງເຕີບໃຫຍ່ຂະຫຍາຍຕົວຢູ່ຈຸດທີ່ເປັນໃຈກາງຂອງດອກ ແລະ ເຮົາຈະແນມເຫັນໄດ້ຢ່າງງ່າຍດາຍ. ໝາກບົວມີລັກສະນະຄ້າຍກັບຝັກບົວທີ່ໃຊ້ກັນຢູ່ໃນຫ້ອງອາບນ້ຳ. ຢູ່ໃນໝາກບົວມີເຕົ້ານ້ອຍໆ ທີ່ມີແກ່ນຢູ່ ພາຍໃນ. ເຕົ້ານ້ອຍໆເຫຼົ່ານີ້ ແຈກຢາຍເປັນວົງ ຊ້ອນກັນຫຼາຍຊັ້ນ. ແກ່ນຂອງມັນ ຄົງຕົວຢູ່ໄດ້ຫຼາຍປີພາຍໃຕ້ເງື່ອນໄຂ ທີ່ເໝາະສົມ. ແກ່ນຂອງ ໝາກບົວມີສີຂາວ ແລະ ສາມາດກິນເປັນອາຫານໄດ້. ສ່ວນວ່າເຫງົ້າ ເຊິ່ງເປັນຮູບທໍ່ກົມຄ້າຍຮູບ ຮ່າງໃສ້ກອກໃຫຍ່ ມີຫຼາຍຮູຢູ່ດ້ານໃນ ມັກເອີ້ນກັນວ່າ "ຫົວບົວ" ກໍ່ສາມາດນຳ ມາປຸງແຕ່ງເປັນອາຫານໄດ້ ເຊັ່ນຕົ້ມເປັນເຄື່ອງດື່ມ ກິນເປັນຢາເຢັນ ຫຼື ເປັນ ອາຫານຫວານ. ໃບຂອງບົວຫຼວງ ມີສີຂຽວ ແລະ ເປັນແຜ່ນໃຫຍ່ແຜ່ກ້ວາງ ຢູ່ເທິງໜ້ານ້ຳ ເໝືອນກັບດອກ. ເພິ່ນມັກນຳເອົາໃບບົວມາໃຊ້ຫໍ່ສິ່ງຂອງຕ່າງໆ ເປັນຕົ້ນແມ່ນປະເພດອາຫານ. ນອກນັ້ນ ຜູ້ຄົນຍັງມັກໃຊ້ໃຈສີຂຽວຂອງແກ່ນ ໝາກບົວແກ່ ເຊິ່ງມີຣົດຂົມເລັກນ້ອຍເປັນຢາບຳລຸງຫົວໃຈຍ້ອນຊາວພຸດ

ຮູບ 1: ຕອນພະພຸດທະເຈົ້າກຳເນີດ









ແລະ ຊຸມຊົນທົ່ວໄປ ມັກນຳໃຊ້ຕົ້ນບົວຫຼວງ ຢູ່ໃນຊີວິດປະຈຳວັນຂອງເຂົາເຈົ້າ ຫຼາຍພໍ
ສົມຄວນ ເຂົາເຈົ້າຈຶ່ງຂຸດຄົ້ນ ຊິ້ນສ່ວນຕ່າງໆຂອງ ຕົ້ນບົວຫຼວງ ດັ່ງ ໝາກ, ເຫງົ້າ ຫຼື
ຫົວບົວ ແລະ ດອກ ເປັນສິນຄ້າຕະຫຼອດປີ ເຊິ່ງສ້າງລາຍ ໄດ້ໃຫ້ປະຊາຊົນໃນຫຼາຍ
ທ້ອງຖິ່ນ ເປັນປົກກະຕິຕະຫຼອດມາ. ຊາວພຸດ ຖືເອົາດອກບົວຫຼວງ ເປັນສັນຍາລັກ
ອັນໜຶ່ງ ຂອງຄວາມສວຍງາມ ແລະ ຈະເລີນຮຸ່ງເຮືອງຂອງຊີວິດ ເພາະເຊື່ອກັນວ່າ
ແມ່ນດອກໄມ້ທີ່ມີການ ພົວພັນກັບພະພຸດທະເຈົ້າ. ສະນັ້ນ ພວກເຮົາຈຶ່ງມັກເຫັນ
ດອກບົວຫຼວງ ທີ່ຜູ້ຄົນນຳມາບູຊາ, ກາບໄຫ້ວພະ ຫຼື ສັກກາລະ ຢູ່ຕາມແທ່ນບູຊາໃນ
ວັດ ຫຼື ຕາມສະຖານທີ່ສັກສິດຕ່າງໆ. ການຈະເລີນເຕີບໃຫຍ່ຂອງ ຕົ້ນດອກບົວຫຼວງ

ເປັນສັນຍາລັກ ທີ່ສະແດງເຖິງການມີອິດທິກຳລັງ ເຊິ່ງໝາຍເຖິງຄວາມເກັ່ງກ້າ, ຄວາມກ້າວໜ້າ ແລະ ຈະເລີນຮຸ່ງເຮືອງດ້ານຈິດໃຈ ຫຼື ຈິດວິນຍານ ທີ່ໄດ້ພົ້ນອອກຈາກໂຄ່ນຕົມ ອັນເປັນແຫຼ່ງກຳເນີດຂຶ້ນສູ່ຄວາມສະຫວ່າງສະໄຫວຂອງແສງແດດ. ມີນິທານເລື່ອງໜຶ່ງ ທີ່ກ່າວເຖິງພະພຸດທະເຈົ້າ ສິດທັດຖະ ໂກຕະມະ ເຊິ່ງເປັນຜູ້ຕົ້ນກຳເນີດຂອງສາສະໜາພຸດ ໄດ້ກ່າວໄວ້ວ່າ ພະອົງໄດ້ຖືກປະສູດຢູ່ໃຕ້ຕົ້ນໂພ ເມື່ອພົ້ນອອກຈາກພະຄັນ (ທ້ອງ) ຂອງມານດາ ກໍສາມາດຍ່າງໄດ້ ເຈັດກ້າວ ເຊິ່ງແຕ່ລະກ້າວຂອງພະອົງມີ ດອກບົວບານຮອງຮັບ.  ໃນເມື່ອ ພະອົງໄດ້ຕັດສະຣູ້ ເປັນພະພຸດທະເຈົ້າແລ້ວກໍເຜີຍແຜ່ທຳມະໃຫ້ແກ່ປວງຊົນທັງຫຼາຍ ໃຫ້ໄດ້ພົ້ນຈາກຄວາມເປັນທຸກທາງດ້ານຈິດໃຈໂດຍຖືເອົາການຈະເລີນ ເຕີບໂຕຂອງບົວຫຼວງ ມາປຽບທຽບໃຫ້ຟັງ. ໃນທາງສາສະໜາພຸດຖືວ່າ ດອກບົວ ທີ່ກຳລັງຈູມຢູ່ນັ້ນ ປຽບເໝືອນຫົວໃຈຂອງສິ່ງທີ່ມີຊີວິດທັງມວນ ແລະດອກບົວ ທີ່ກຳລັງເບັ່ງບານ ກໍປຽບເໝືອນພະພຸດທະເຈົ້າ ທີ່ກຳລັງສະແດງ ພະທຳຄຳສອນ. ດັ່ງນັ້ນ ພວກເຮົາ ມັກຈະເຫັນ ຮູບພາບ ຫຼື ຮູບປັ້ນ ຂອງ ພະພຸດທະເຈົ້າ ກຳລັງຖືດອກບົວຢູ່ໃນມື ຫຼື ນັ່ງຢູ່ເທິງດອກບົວ ທີ່ກຳລັງເບັ່ງບານ ຢ່າງສະຫງ່າງາມ.

ນອກຈາກ ບົວຫຼວງແລ້ວ ຕົ້ນໂພ ກໍເປັນສັນຍາລັກອັນໜຶ່ງຂອງຊາວພຸດ. ຕົ້ນໂພເປັນຕົ້ນໄມ້ໃຫຍ່ ທີ່ມີລຳຕົ້ນແຂງແຮງ, ມີອາຍຸຍືນຍາວ, ມີກິ່ງກ້ານ ແລະ ໃບແຜ່ອອກຢ່າງກ້ວາງຂວາງ, ໃບໂພ ມີຮູບລັກສະນະຄ້າຍກາຫົວໃຈ. ເຮົາມັກຈະເຫັນຕົ້ນໂພ ເຕີບໃຫຍ່ຢູ່ຕາມວັດຕ່າງໆ ແລະ ເຊື່ອວ່າມີສິ່ງສັກສິດສິງສະຖິດຢູ່ໃນຕົ້ນໂພ. ຫຼັງຈາກການຕັກບາດ ໃນງານບຸນຕ່າງໆໃນວັດ ຜູ້ຄົນທັງຫຼາຍ ມັກຈະໃສ່ເຂົ້າບູຊາ ແລະ ຈູດທູບທຽນ ຢູ່ໃຕ້ຕົ້ນໂພ ເພື່ອອຸທິດບຸນກຸສົນໃຫ້ແກ່ຍາດຕິພີ່ນ້ອງທີ່ຕາຍໄປແລ້ວ ແລະ ຍັງອະທິດຖານເພື່ອໃຫ້ສິ່ງສັກສິດ ທີ່ສິງສະຖິດຢູ່ໃນຕົ້ນໂພນັ້ນຄຸ້ມຄອງຕົນເອງໃຫ້ຢູ່ເຢັນເປັນສຸກ, ມີຄວາມແຂງແກ່ນ ແລະ ມີອາຍຸຍືນຍາວເໝືອນດັ່ງຕົ້ນໂພ.  ນອກຈາກນັ້ນ ໃນຄຳກ່າວອວຍພອນຜູ້ເຖົ້າ, ພໍ່ແມ່ ຫຼື ຜູ້ອາວຸໂສທີ່ເຮົາໃຫ້ຄວາມນັບຖື ເຮົາກໍມັກຈະໄດ້ຍິນຄຳເວົ້າ ທີ່ວ່າ “ຂໍໃຫ້ທ່ານມີອາຍຸຍືນຍາວເພື່ອເປັນຮົ່ມໂພຮົ່ມໄຊໃຫ້ແກ່ລູກ ຫຼານເຫຼັນ”.

ຮູບ 2: ຮູບໝາກບົວ

ຮູບ 3: ຕົ້ນ ດອກບົວຫຼວງ

ຮູບ 4: ຕອນພະພຸດທະເຈົ້າສະແດງທຳມະ





## ພິທີບາສີ-ສູ່ຂ້ວນ

"ບາສີ" ເປັນພິທີການໜຶ່ງຂອງປະເພນີລາວ ເຊິ່ງຊາວລາວມັກ ເອີ້ນກັນ ວ່າ "ສູ່ຂ້ວນ". ເພິ່ນຈັດບາສີ ຂຶ້ນເພື່ອສະເຫຼີມສະຫຼອງເຫດການ ຫຼື ວັນສຳຄັນຕ່າງໆ ໂດຍສະເພາະເປັນວັນທີ່ມີຄວາມໝາຍ ແລະ ປີ້ມປິຕິຍິນດີ ຂອງເຈົ້າພາບຜູ້ທີ່ຈັດພິທີ ເຊັ່ນ ໃນວັນຂຶ້ນປີໃໝ່ລາວ, ສູ່ຂວັນນາກ ກ່ອນຈະເຂົ້າສູ່ວັດ, ຮັບຂ້ວນຄົນທີ່ຟື້ນຈາກການເຈັບໄຂ້ໄດ້ປ່ວຍໃໝ່ໆ, ພິທີແຕ່ງງານ, ຂຶ້ນເຮືອນໃໝ່, ເດັກເກີດໃໝ່ ຫຼື ອອກກຳ, ຕ້ອນຮັບແຂກບ້ານແຂກເມືອງ ຫຼືຍາດພີ່ນ້ອງ ທີ່ເດີນທາງມາແຕ່ໄກເພື່ອມາຢ້ຽມຢາມ ຫຼືກຳລັງຈະ ເດີນຈາກໄປໄກ. ການຈັດພິທີບາສີ ແມ່ນຈັດຂຶ້ນວັນໃດກໍໄດ້ຕະຫຼອດປີ, ແຕ່ ໂດຍສ່ວນໃຫຍ່ແລ້ວ ເພິ່ນຈະອີງຕາມການຄິດໄລ່ຂອງຜູ້ເຖົ້າຜູ້ແກ່ ເພື່ອຫາມື້ສັນວັນດີ ເຊິ່ງອີງຕາມປະຕິທິນທາງສາສະໜາ ຄືອີງຕາມເດືອນແຮມ ຫຼື ເດືອນ ອອກໃໝ່,... ດັ່ງນີ້ເປັນຕົ້ນ ແລະ ສ່ວນຫຼາຍມັກຈັດຂຶ້ນກ່ອນທ່ຽງ ຫຼື ກ່ອນ ຕາເວັນຕົກດິນ ເພາະມີຄວາມເຊື່ອວ່າ ຊີວິດຈະໄດ້ຮຸ່ງເຮືອງບໍ່ທົດຖອຍລົງ ເໝືອນດັ່ງດວງຕາເວັນທີ່ກຳລັງຈະຕົກດິນ. ຄວາມໝາຍຂອງການຈັດບາສີ ສູ່ຂວັນ ມີຢູ່ວ່າ: ປະຊາຊົນ ຄົນລາວມີຄວາມເຊື່ອກັນວ່າ ທຸກຄົນເກີດມາຕ້ອງມີອະໄວຍະວະຄົບຖ້ວນ 32 ປະການ ພ້ອມທັງມີຂ້ວນປະຈຳຢູ່ນຳແຕ່ລະສ່ວນ ຈຶ່ງຖືວ່າເປັນຄົນ ທີ່ສົມບູນແຂງແຮງ ທັງຮ່າງກາຍ ແລະ ຈິດໃຈ; ຖ້າຂວັນ ຂອງອະໄວຍະວະ ໃດໜຶ່ງຫາຍ ຫຼື ອອກຈາກໄປທີ່ອື່ນ ກໍອາດເຮັດໃຫ້ ຄົນໆນັ້ນ ບໍ່ສະບາຍເຈັບໄຂ້ໄດ້ປ່ວຍ ຫຼື ອາດໄດ້ຮັບເຄາະຮ້າຍ ຫຼື ບໍ່ມີໂຊກ ດັ່ງນີ້ ເປັນຕົ້ນ. ດັ່ງນັ້ນ ການສູ່ຂວັນ ຈຶ່ງ ເປັນພິທີອັນໜຶ່ງ ເພື່ອເອີ້ນຂວັນ ກັບຄືນມາຢູ່ນຳພາກສ່ວນຕ່າງໆຂອງຮ່າງກາຍ ຢ່າງຄົບຖ້ວນເໝືອນເດີມ ເພື່ອໃຫ້ຄົນໆ ນັ້ນມີສຸຂະພາບແຂງແຮງ, ມີໂຊກໄຊ ມີຄວາມສຳເລັດ ໃນການປະຕິບັດ ວຽກງານ ຫຼື ມີຄວາມປອດໄພໃນການເດີນທາງ. ເຄື່ອງປະກອບໃນງານບາສີ ມີ ພາຂວັນ, ເຂົ້າຕົ້ມ ເຂົ້າໜົມ, ໄຂ່ຕົ້ມ, ໄກ່ຕົ້ມ, ເຫຼົ້າ, ນ້ຳ ແລະ ຕົບເຂົ້າ,... ດັ່ງນີ້ເປັນຕົ້ນ. ການກະກຽມພາຂວັນ ສ່ວນຫຼາຍ ແມ່ນຜູ້ເຖົ້າຜູ້ແກ່ ເຊິ່ງເລີ້ມດ້ວຍການຫຍິບໝາກເບັງຈາກ ໃບຕອງກ້ວຍ ເຊິ່ງເພິ່ນນຳມາຈີບໃຫ້ເປັນຮູບລັກສະນະສາມ ລ່ຽມຫຼາຍໆອັນ ແລ້ວຫຍິບຄັດຕິດ ແລະ ຊ້ອນເຫຼື່ອມກັນ ໃຫ້ເປັນຮູບຈວຍ ຕາມຂະໜາດ ທີ່ຕ້ອງການ ແລ້ວເອ້ດ້ວຍດອກໄມ້ ຫຼາກຫຼາຍຊະນິດ ພ້ອມທັງໃບໄມ້ທີ່ເປັນມຸງຄຸນ. ດອກໄມ້ທີ່ໃຊ້ປະດັບ ພາຂວັນຈະແຕກຕ່າງກັນຕາມເຫດການ ແລະ ກໍຂຶ້ນກັບລະດູຂອງດອກໄມ້ອີກ ເຊັ່ນວ່າ ໃນງານສູ່ຂວັນ ປີໃໝ່ລາວ ເພິ່ນກໍມັກໃຊ້ ດອກຈຳປາ, ດອກດາວເຮືອງ, ດອກສາມປີ, ດອກຄູນ, ໃບເງິນ ໃບຄຳ ເປັນຕົ້ນ. ສ່ວນວ່າໃນພິທີແຕ່ງງານ ດອກໄມ້ທີ່ເພິ່ນມັກໃຊ້ ແມ່ນ ດອກຮັກ, ດອກດາວເຮືອງ,

ຮູບ 1: ພິທີສູ່ຂວັນ ບາສີ



ໃບເງິນ ໃບຄຳ ແລະ ໃບຄູນ ເປັນສ່ວນໃຫຍ່ ໂດຍ ອີງຕາມຄວາມໝາຍເຊິ່ງມາຈາກ ຊື່ຂອງດອກໄມ້ ທີ່ສະແດງເຖິງຄວາມຮັກ ແລະ ຄວາມຮຸ່ງເຮືອງ ຕະຫຼອດຊີວິດ ຄູ່ນັ້ນເອງ. ນອກຈາກນັ້ນ ເພິ່ນຍັງເອົາ ຝ້າຍສີຂາວ ທີ່ມີຄວາມຍາວປະມານພໍມັດ ຮອບແຂນໄດ້ມາຮ້ອຍຮຽງ ເປັນແຖວ ໃສ່ໄມ້ດີ້ວນ້ອຍໆ ແລ້ວປັກສຽບອ້ອມ ຕາມ ໝາກເບັງ ແລະ ຝ້າຍຂາວເສັ້ນຍາວ ຈຳນວນໜຶ່ງພາດຜ່ານຈອມໝາກເບັງ. ຝ້າຍ ຂາວນີ້ ເພິ່ນເອີ້ນວ່າ ຝ້າຍຜູກແຂນ. ຊົນເຜົ່າລາວລຸ່ມ ຖືວ່າສີຂາວ ແມ່ນສະແດງເຖິງ ຄວາມສົດໃສ, ຊື່ສັດບໍລິສຸດຜຸດຜ່ອງ. ຢູ່ທີ່ຈອມຂອງໝາກເບັງ ມີທຽນໄຂມັດຕິດຢູ່. ໝາກເບັງທີ່ເພິ່ນເອ້ແລ້ວ ກໍຖືກນຳມາຕັ້ງລົງເທິງໂອເງິນ ເຊິ່ງມີເຂົ້າສານບັນຈຸຢູ່ ແລະ ມີແກ້ວເຫຼົ້າຂາວ ຫຼື ເຫຼົ້າຊະນິດອື່ນກໍໄດ້ ຕັ້ງຢູ່ໃຈກາງ. ສຸດທ້າຍເພິ່ນຈຶ່ງເອົາໂອ ພາຂວັນມາວາງໃສ່ໃຈກາງພານ ຫຼື ພາເຂົ້າໄມ້ເຊິ່ງປູດ້ວຍແຜ່ນຜ້າທີ່ສວຍງາມ. ເທິງພາເຂົ້າ ມີຖ້ວຍນ້ອຍ 4 ຫາ 6 ໃບ ວາງອ້ອມຢູ່ ເພື່ອໃສ່ໄຂ່ຕົ້ມ, ເຂົ້າຕົ້ມ, ເຂົ້າໜົມ ແລະ ໝາກໄມ້. ຢູ່ຂ້າງໆພາຂວັນ ມີໄກ່ຕົ້ມ ເຊິ່ງເພິ່ນເອີ້ນວ່າ ໄກ່ຂວັນ ນັ້ນເອງ. ຕາມຄວາມຈິງ ພາບາສີ ກໍມີຫຼາຍແບບ ແຕ່ໂດຍສ່ວນໃຫຍ່ແລ້ວ ພາບາ ສີຂອງຊາວລາວທົ່ວໄປ ຈະມີໃບສີ ຈຳນວນ 4 ຫາ 6 ຊັ່ນ ປະດັບອອກທາງຂ້າງ ແລະ



ທັງໝົດຈຶ່ງປະດັບດ້ວຍດອກໄມ້ ເຮັດໃຫ້ພາບາສີໂດດເດັ່ນຂຶ້ນ. ສ່ວນວ່າ ຊາວຫຼວງພະບາງ ຈະປະກອບພາບາສີແບບດັ້ງເດີມຢ່າງລຽບງ່າຍ ແຕ່ເຕັມໄປດ້ວຍຄວາມໝາຍ. ໂດຍລວມ ພາບາສີແບບນີ້ຕ່ຳ ປະກອບດ້ວຍໝາກເບັງຂະໜາດນ້ອຍໆ ຕັ້ງຢູ່ໃຈກາງອ້ອມລ້ອມດ້ວຍຈອຍໃຫຍ່ ເຊິ່ງບັນຈຸດອກໄມ້, ເຄື່ອງໝາກເຄື່ອງພູ, ໃບເງິນ ໃບຄຳ. ທັງໝົດ ຈັດຢູ່ໃນໂອທີ່ມີເຂົ້າສານເຕັງຢູ່ຕີນເພື່ອຈັບທັງໝົດໃຫ້ຢູ່ຕົວ. ຈາກນັ້ນທັງໝົດໂອພາບາສີ ຈຶ່ງຖືກເອົາມາວາງເທິງຂັນ ແລະ ປະດັບແຄມດ້ວຍດອກໄມ້ອີກເທື່ອໜຶ່ງ. ເມື່ອພາຂ້ວນພ້ອມແລ້ວ ແລະ ພໍເຖິງເວລາທີ່ຊາວພຸດເຊື່ອວ່າເປັນເລີກງາມ ຍາມດີ ທຸກຄົນກໍຖືຜ້າບ່ຽງພາດບ່າ ເຂົ້າມານັ່ງອອ້ມພາຂ້ວນ ເພື່ອເລີ່ມພິທີສູ່ຂ້ວນ. ຜູ້ທີ່ນຳພາພິທີສູ່ຂວັນ ເອີ້ນວ່າ “ໝໍພອນ”. ຂ້າງໜ້າຂອງໝໍພອນ ມີຂັນພ້ອມບ້າງທີ່ເຮັດດ້ວຍໃບຕອງ ໃສ່ດອກໄມ້ 1 ຄູ່, ທຽນ 1 ຄູ່ ແລະ ເງິນຈຳນວນໜຶ່ງຕາມແຕ່ເຈົ້າສັດທາພ້ອມດ້ວຍຈອກເຫຼົ້ານ້ອຍອັນໜຶ່ງ. ໝໍພອນກ່າວຄຳຄ້າຍກັບຄຳເທດ ເຊິ່ງມີເນື້ອໃນສຳຄັນ ກໍຄືເອີ້ນຂວັນຕ່າງໆ ຂອງຮ່າງກາຍທີ່ຫຼົງຫາຍໄປໃຫ້ກັບເຂົ້າມາສູ່ເນື້ອສູ່ຄີງ ເພື່ອໃຫ້ມີສຸຂະພາບແຂງແຮງ, ມີແຕ່ຄວາມຮຸ່ງເຮືອງ ໂຊກລາບ, ປະສົບຄວາມສຳເລັດໃນຊີວິດ. ເມື່ອໝໍພອນກ່າວສິ້ນສຸດແລ້ວ ກໍໃຊ້ຝ້າຍຜູກແຂນຜູກໃຫ້ຜູ້ທີ່ຖືກສູ່ຂ້ວນນັ້ນກ່ອນ ໂດຍວາງເຂົ້າຕົ້ມ ເຂົ້າໜົມ ແລະ ໄກ່ຂວັນໃສ່ໃນມືຂອງຜູ້ນັ້ນ ແລະ ຫຼັງຈາກນັ້ນ ຄົນອື່ນກໍຜູກຕາມ. ຫຼັງຈາກພິທີສູ່ຂວັນຈົບແລ້ວຄອບຄົວກໍ່ຍົກພາຂວັນໄປວາງໄວ້ບໍລິເວນເທິງຫົວບ່ອນນອນເປັນເວລາສາມວັນ ເພື່ອເປັນສິລິມົງຄົນ. ຫຼັງຈາກພິທີສູ່ຂວັນ ບາງຄັ້ງກໍຍັງມີພິທີການຂໍສົມມາຜູ້ອາວຸໂສ ເຊັ່ນ ພໍ່ແມ່, ປູ່ ຍ່າ, ພໍ່ເຖົ້າ, ແມ່ເຖົ້າ ຫຼື ຍາດພີ່ນ້ອງຜູ້ອາວຸໂສ ເພື່ອຂໍອະໂຫສິກຳ (ຂໍໂທດ, ຂໍອະໄພ) ໃນສິ່ງທີ່ຕົນເອງໄດ້ລ່ວງເກີນ ຫຼື ກະທຳຜິດພາດຜ່ານມາ. ໃນພິທີດັ່ງກ່າວນີ້ຜູ້ທີ່ຂໍສົມມາ ຖືຂັນດອກໄມ້ແລ້ວກ່າວຄຳຂໍສົມມາ ແລ້ວກໍຈັບເອົາສິ້ນໜຶ່ງຂອງແພບ່ຽງຂອງຜູ້ອະວຸໂສທີ່ບ່ຽງຢູ່ ມາແປະໃສ່ຫົວຂອງຕົນເອງ ເພື່ອສະແດງຄວາມເຄົາລົບນັບຖື. ຫຼັງຈາກນີ້ ກໍຖືວ່າ ພິທີທັງໝົດໄດ້ສິ້ນສຸດລົງ ແລະ ທຸກຄົນກໍເຂົ້າຮ່ວມຮັບປະທານອາຫານທີ່ທາງເຈົ້າພາບຈັດຕຽມໄວ້ ເພື່ອເປັນສິລິມຸງຄຸນແກ່ງານດັ່ງກ່າວ.

ຮູບ 2: ຮູບພາບາສີ ແບບຊາວຫຼວງພະບາງ
ຮູບ 3: ດອກໄມ້ທີ່ນິຍົມກັນໃຊ້ເອ້ໝາກເບັງ
ຮູບ 4: ການກະກຽມພາຂ້ວນ







## ບຸນປີໃໝ່ລາວ

ບຸນປີໃໝ່ລາວ ຫຼື ເອີ້ນວ່າ ສົງການ ເປັນບຸນປະເພນີອັນໜຶ່ງຂອງລາວເຮົາ ແລະ ກໍເປັນບຸນສະເຫຼີມສະຫຼອງກັນທົ່ວປະເທດ ຕັ້ງແຕ່ເໜືອຕະຫຼອດໃຕ້ ປີລະຄັ້ງ ຄືໂດຍທົ່ວໄປເລີ່ມແຕ່ວັນທີ່ 13 ຫາ 15 ຂອງເດືອນເມສາ ເຊິ່ງເປັນເດືອນທີ່ຮ້ອນທີ່ສຸດໃນຮອບປີ. ນອກຈາກປະເທດລາວເຮົາແລ້ວ ບາງປະເທດອື່ນ ກໍສະຫຼອງສົງການເໝືອນກັນ ເຊັ່ນ ປະເທດໄທ, ກຳປູເຈຍ ແລະ ມຽນມ້າ. ໃກ້ຈະຮອດບຸນປີໃໝ່ ຊາວລາວພາກັນກະກຽມ ຕ້ອນຮັບປີໃໝ່ ເຊັ່ນ ທຳຄວາມສະອາດ ຕາມເຮືອນຊານ ບ້ານຊ່ອງ, ກະກຽມຫາດອກໄມ້ທີ່ມີກິ່ນຫອມ ເຊັ່ນ ດອກເຂັມຂາວ, ດອກຂັດເຄົ້າ, ດອກຈຳປາ, ດອກຈຳປີ, ດອກດາວເຮືອງ, ດອກຄູນ ແລະ ອື່ນໆ ເຊິ່ງເພິ່ນເອົາມາປະສົມໃສ່ກັນ ເພື່ອປຸງແຕ່ງນ້ຳຫອມສົງພະ. ນອກຈາກນັ້ນ ເພິ່ນຍັງເອົາດອກ ແລະ ໃບຄູນ ມາເໜັບໄວ້ນຳປະຕູບ້ານປະຕູເຮືອນ ເພາະມີຄວາມເຊື່ອວ່າເປັນສິລິມົງຄຸນ. ນ້ຳຫອມສົງພະ ແມ່ນປະສົມຈາກນ້ຳ, ຂີ້ໝິ້ນ, ໝາກສົ້ມປ່ອຍເຜົາໄຟ ແລະ ກີບດອກໄມ້ຊະນິດຕ່າງໆ ດັ່ງທີ່ກ່າວມານັ້ນ.

ອີງຕາມປະເພນີ ທີ່ສືບເນື່ອງມາແຕ່ບູຮານນະການ ບຸນປີໃໝ່ລາວ ແກ່ ຍາວ 3 ວັນ ຄື: ວັນສັງຂານໄປ ຫຼື ວັນສັງຂານລ່ວງ ເຊິ່ງໝາຍເຖິງ ວັນສິ່ງທ້າຍປີເກົ່າ, ວັນເນົາ ເຊິ່ງໝາຍເຖິງວັນລະຫວ່າງກາງ ແລະ ວັນສັງຂານຂຶ້ນ ເຊິ່ງແມ່ນວັນເລີ້ມຕົ້ນຂອງປີໃໝ່ນັ້ນເອງ. ກ່ຽວກັບວັນບຸນ ປີໃໝ່ລາວ ຫຼື ວັນສົງການນີ້ ມີນິທານເລື່ອງໜຶ່ງໄດ້ກ່າວໄວ້ວ່າ: ກາລະຄັ້ງໜຶ່ງນານມາແລ້ວ ມີລູກເສດຖີຄົນໜຶ່ງ ຊື່ ທຳມະປະລະກຸມມານ ຫຼື ເອີ້ນວ່າ ທຳມະບານ ເປັນຄົນມີຄວາມຮູ້, ສະຫຼາດຫຼັກແຫຼມ ແລະ ສາມາດເຂົ້າໃຈພາສານົກໄດ້. ລາວໄດ້ອອກທ່ຽວສອນທຳມະ ແລະ ຄວາມຮູ້ໃຫ້ ແກ່ປວງຊົນທັງຫຼາຍ ເຊິ່ງເຮັດໃຫ້ຄົນທັງຫຼາຍ ສັດທາ ແລະ ເຄົາລົບນັບຖື ຈົນມີຊື່ສຽງເລືອງລືໄປທົ່ວພິພົບ ຈົນເຮັດໃຫ້ ພະຍາພົມ ກະບິນລະພົມ ຢາກທົດສອບຄວາມສະຫຼາດຂອງທຳມະປະລະກຸມມານ. ພະຍາກະບິນລະພົມ ຈຶ່ງໄດ້ສະເດັດລົງມາຫາທຳມະປະລະກຸມມານ ແລະ ຕັ້ງຄຳຖາມຂຶ້ນ 3 ຂໍ້ ຄື: 1) ຕອນເຊົ້າ ສິລິຂອງຄົນຢູ່ໃສ ? 2) ຕອນທ່ຽງ ສິລິຂອງຄົນຢູ່ໃສ ? ແລະ 3). ຕອນກາງຄືນ ສິລິຂອງຄົນຢູ່ໃສ ? ໂດຍວາງ ເງື່ອນໄຂໄວ້ວ່າ: ຖ້າຕອບບໍ່ໄດ້, ພະຍາພົມກະບິນລະພົມ ຈະຕັດຫົວທ້າວທຳມະປະລະກຸມມານ; ຖ້າຫາກ ວ່າຕອບໄດ້ ພະຍາ ພົມກະບິນລະພົມ ຈະຕັດຫົວຂອງຕົນເອງ ແລະ ໃຫ້ເວລາ ແກ່ທ້າວ ທຳມະປະລະກຸມານ ໄປຄົ້ນຄິດ 7 ວັນ. ພໍເຖິງວັນຖ້ວນ 3 ທ້າວທຳມະປະລະກຸມມານ ກໍຍັງ ຄິດຫາຄຳຕອບບໍ່ໄດ້ ຈຶ່ງຄິດວ່າຕົນຈະຕ້ອງ

ຮູບ 1: ຮູບ ການສົງພະໃນວັນສົງການ









ຕາຍຍ້ອນ ຄົມດາບຂອງພະຍາ ກະບິນລະພົມ ເພື່ອປະໂຫຍດອັນໃດ ຕົນຈະໜີໄປ ຕາຍເອົາດາບໜ້າ ຈະບໍ່ດີກ່ວາບໍ. ເວົ້າແລ້ວ ລາວກໍ່ອອກເດີນທາງ, ພໍຮອດຍາມຄ່ຳ ລາວໄດ້ໄປ ນອນຢູ່ກ້ອງຕົ້ນຕານ, ກໍ່ບັງເອີນ ໄດ້ຍິນນົກອິນຊີຜົວເມຍ ຄູ່ໜຶ່ງ ເຊິ່ງອາໄສ ຢູ່ເທິງຕົ້ນຕານ ລົມກັນ. ນົກຕົວເມຍຖາມຜົວວ່າ ມື້ອື່ນນີ້ ພວກເຮົາຈະເອົາອັນໃດມາ ເປັນອາຫານ, ນົກຕົວຜົວຈຶ່ງຕອບວ່າ ຈະໄດ້ກິນຊາກສົບ ຂອງ ທຳມະປະລະກຸມມານ ທີ່ພະຍາກະບິນລະພົມ ຈະຂ້າເພາະຕອບຄຳຖາມ ບໍ່ໄດ້. ເມື່ອນົກຕົວເມຍ ຖາມວ່າ ຄຳຖາມນັ້ນເປັນຄືແນວໃດ ນົກຕົວຜູ້ ກໍເລີຍເວົ້າສູ່ເມຍຟັງ ແລະ ບອກຄຳຕອບພ້ອມ ຄື: ຕອນເຊົ້າ ສິລິຂອງຄົນຢູ່ທີ່ໜ້າ ດັ່ງນັ້ນ ຄົນທັງຫຼາຍ ຈຶ່ງເອົານ້ຳສວ່າຍໜ້າ, ຍາມທ່ຽງ ສິລິຂອງຄົນຢູ່ເອິກ ຄົນທັງຫຼາຍ ຈຶ່ງເອົານ້ຳ ແລະ ຂອງຫອມ ລູບເອິກ, ຕອນຄ່ຳ ສິລິ ຂອງຄົນຢູ່ຕີນ ຄົນທັງຫຼາຍຈຶ່ງເອົານ້ຳລ້າງຕີນກ່ອນເຂົ້ານອນ. ເມື່ອ ທຳມະປະລະກຸມມານ ໄດ້ຍິນ ດັ່ງນັ້ນ ກໍຈື່ຈຳເອົາ ແລ້ວກໍ່ຕ່າວກັບຄືນມາຜາສາດຂອງຕົນ ແລະ ຕອບຄຳຖາມໄດ້ ໃນວັນຕໍ່ມາ. ດັ່ງນັ້ນ ພະຍາກະບິນລະພົມ ຈຶ່ງຕ້ອງໄດ້ຕັດຫົວຂອງຕົນເອງ ດັ່ງທີ່ ໄດ້ວາງເງື່ອນໄຂໄວ້. ກ່ອນຕັດຫົວຂອງຕົວເອງ ພະຍາກະບິນລະພົມ ໄດ້ເອີ້ນ ລູກສາວທັງ 7 ມາສັ່ງວ່າ ພໍ່ຈະຕັດຫົວບູຊາ ທຳມະປະລະກຸມມານ; ຖ້າຫົວຂອງພໍ່ ຫາກຕົກລົງໃສ່ແຜ່ນດິນ ໄຟກໍຈະໃໝ້ໂລກ; ຖ້າໂຍນຂຶ້ນໄປ ເທິງຟ້າ ກໍຈະເກີດໄພ ແຫ້ງແລ້ງ; ຖ້າຖິ້ມລົງໃນມະຫາສະມຸດ ນ້ຳກໍຈະແຫ້ງ. ດັ່ງນັ້ນ ໃຫ້ພວກລູກ ທັງ 7 ຄົນເອົາພາພານ ມາຮອງຮັບເອົາຫົວຂອງພໍ່ໄວ້ ແລ້ວເຊີນໄປຕັ້ງໄວ້ໃນຖ້ຳຄັນທະທຸລີ ທີ່ພູເຂົາໄກລາດ ແລະ ບູຊາດ້ວຍເຄື່ອງ ສັກກາລະທິບຕ່າງໆດ້ວຍເຖີ້ນ. ເມື່ອຄົບຮອບ ເວລາ ໃນແຕ່ລະປີ ດັ່ງ ວັນປີໃໝ່ ຫຼື ວັນສັງຂານ ລູກສາວທັງ 7 ກໍປ່ຽນຜ່ຽນ ກັນຕາມ ລຳດັບ ພາບໍລິວານ ແລະ ເທບພະຍະດາ ທັງຫຼາຍ ມາເຊີນເອົາຫົວຂອງ ພະຍາ ພົມກະ ບິນລະພົມ ອອກມາຫົດສົງ ແລະ ແຫ່ວຽນອອ້ມເຂົາພະສຸເມນ. ຫຼັງຈາກນັ້ນ ຂະບວນ ກໍນຳຫົວຂອງພະຍາກະບິນລະພົມ ໄປໄວ້ທີ່ເດີມ. ສະນັ້ນ ເພິ່ນຈຶ່ງເອີ້ນ ລູກສາວທັງ 7 ຂອງ ພະຍາກະບິນລະພົມ ວ່າ ນາງສັງຂານແຕ່ນັ້ນມາ. ນາງສັງຂານທັງ 7 ນີ້ສະເດັດ ມາໃນທ່າຕ່າງກັນ ເຊິ່ງເພິ່ນຖືວ່າເປັນສັນຍາລັກໃຫ້ແກ່ແຕ່ລະວັນເຊັ່ນວ່າ ນາງສັງຂານ ຜູ້ທີ່ເປັນສັນຍາລັກໃຫ້ແກ່ ວັນເສົາ ແມ່ນ ນາງມະໂນທອນ ທັດດອກຜັກຕົບ, ລາວມັກ ຊີ້ນຊາຍ (ສັດປະເພດຟານ) ມີອາວຸດ ຄື ມືຂວາຖືກົງຈັກ ມືຊ້າຍຖືຕຣີສູນ (ຫອກສາມ ງ່າມ) ພາຫະນະ ແມ່ນ ນົກຍຸງ; ວັນອາທິດ ຊື່ວ່ານາງທຸງສະເທວີ ມັກກິນ ໝາກເດື່ອ ເປັນອາຫານ ຖືອາວຸດຄື ມືຂວາຖື ກົງຈັກ ມືຊ້າຍຖື ສັງ(ຫອຍສັງ) ແລະ ພາຫະນະ ແມ່ນ ຄຸດ. ສັນຍາລັກຂອງວັນຈັນ ແມ່ນ ນາງ ໂຄຣາຄະ ທັດ ດອກກາງຂອບ (ແມ່ນຊື່ຂອງດອກໄມ້ຊະນິດຫນຶ່ງ) ເຄື່ອງປະດັບ ເປັນແກ້ວ ແລະ ມຸກ, ອາຫານ ໄດ້ແກ່ ນ້ຳນົມ ໃນມື ຖື ພະຂັນ (ດາບ) ມືຊ້າຍ ຖືໄມ້ເທົ້າ, ພາຫະນະ ແມ່ນ ເສືອ; ວັນອັງຄານ







ແມ່ນ ນາງ ຣາກສະ ທັດດອກບົວຫຼວງ ພ້ອມດ້ວຍເຄື່ອງປະດັບແກ້ວໂມຣາ, ອາຫານ ແມ່ນ ໂລຫິດ (ເລືອດ) ມືຂວາຖື ຕຼີສູນ ມືຊ້າຍຖືທະນູ ພາຫະນະ ແມ່ນ ໝູ. ສັນຍາລັກຂອງວັນພຸດ ແມ່ນ ນາງ ມຸນທາ ທັດດອກຈຳປາ  ພ້ອມດ້ວຍ ເຄື່ອງປະດັບແກ້ວພິທູນ, ອາຫານ ແມ່ນນົມເນີຍ ແລະ ມືຂວາຖືເຂັມ ມືຊ້າຍ ຖືໄມ້ເທົ້າ ພາຫະນະ ແມ່ນ ລໍ. ສັນຍາລັກຂອງວັນພະຫັດ ແມ່ນ ນາງ ກິຣິນີ ທັດດອກມົນທາ (ແມ່ນຊື່ຂອງດອກໄມ້ຊະນິດໜຶ່ງ) ພ້ອມດ້ວຍເຄື່ອງປະດັບແກ້ວມໍລະກົດ, ອາຫານແມ່ນ ຖົ່ວງາ,  ມືຂວາຖືຂໍ ມືຊ້າຍຖືປືນ ພາຫະນະ ແມ່ນ ຊ້າງ. ສັນຍາລັກຂອງວັນສຸກ ແມ່ນ ນາງ ກິມິທາ ທັດດອກຈັ່ງກອນ ພ້ອມ ດ້ວຍເຄື່ອງປະດັບແກ້ວບຸດສະຣາຄຳ, ອາຫານ ແມ່ນ ກ້ວຍນ້ຳ, ອາວຸດໃນມືຂວາ ແມ່ນພະຂັນ, ມືຊ້າຍ ຖືພິນ, ພາຫະນະ ແມ່ນ ຄວາຍ.

ອີງຕາມປະເພນີສືບຕໍ່ກັນມາ ເມື່ອເຖິງວັນສັງຂານແລ້ວ ຍາມເຊົ້າຄົນທັງປວງພາກັນອອກໄປເຮັດບຸນ ຕັກບາດຢູ່ວັດ, ໄຫວ້ພະພຸດທະຮູບ, ພະທາດເຈດີດ້ວຍດອກໄມ້ທູບທຽນ ແລະ ກໍນິມົນເອົາພະພຸດທະຮູບ ລົງມາຈາກຮ້ານພະ ເພື່ອມາປະດິດສະຖານໄວ້ທີ່ໂຮງ ເພື່ອຫົດສົງ ເອີ້ນວ່າ “ເອົາພະລົງ”. ເມື່ອເຖິງ ເວລາຄ່ຳຄືນ ໃນລະຫວ່າງວັນສັງຂານນີ້ ກໍພາກັນກໍ່ພະທາດ ເຈດີ ດ້ວຍດິນຊາຍ ເອີ້ນວ່າ “ຕົບພະທາຍ”, ທຳບຸນໃຫ້ທານ, ຟັງທຳມະເທດສະໜາ, ເຮັດບັງສະກຸນເພື່ອເຮັດທານຫາຜູ້ທີ່ລ່ວງລັບໄປຕາມສັດທາຂອງໃຜລາວ ດັ່ງນີ້ ເປັນຕົ້ນ.

ເມື່ອເຖິງວັນທີ່ສາມ ຄືວັນສັງຂານຂຶ້ນ ພະພິຊຸສົງ ກໍຈະນິມົນເອົາພະພຸດທະຮູບທຸກອົງຂຶ້ນຄືນໄວ້ແທ່ນເດີມ ເຊິ່ງເຮົາເອີ້ນວັນນີ້ວ່າ ວັນສັງຂານຂຶ້ນ ຫຼື ວັນຂຶ້ນປີໃໝ່ນັ້ນເອງ.ຫຼັງຈາກທີ່ນິມົນພະຂຶ້ນແທ່ນຄືນ ແລ້ວ ພິທີການສະເຫຼີມສະຫຼອງ ປີໃໝ່ລາວກໍສິ້ນສຸດລົງ. ໃນໄລຍະຕົ້ນຂອງປີໃໝ່ນີ້ ແຕ່ລະຄອບຄົວກໍມັກຈັດບາສີສູ່ຂວັນກັນເພື່ອຮັບໂຊກໄຊໃໝ່.



ຮູບ 2-3: ດອກໄມ້ຊະນິດຕ່າງໆ ທີ່ຊາວລາວ ມັກນຳໃຊ້ໃນໄລຍະປີໃໝ່ ດອກຂັດເຄົ້າ, ດອກຈຳປີ, ດອກເຂັມຂາວ, ດອກຈຳປາ

ຮູບ 4: ດອກຄູນ, ດອກດາວເຮືອງ

ຮູບ 5: ຫົວພະຍາກະບິນລະພົມສີ່ໜ້າ

ຮູບ 6: ສັນຍາລັກໃຫ້ແກ່ວັນອາທິດ

ຮູບ 7: ສັນຍາລັກ ໃຫ້ແກ່ວັນເສົາ



## ພິທີໄຫວ້ຜີຫໍເຈົ້າບ້ານ

ພິທີໄຫ້ວຜີຫໍເຈົ້າບ້ານ ກໍແມ່ນອີກຮູບແບບໜຶ່ງຂອງປະເພນີລາວ, ພິທີນີ້ ມີຫຼາຍຮູບແບບແຕກຕ່າງກັນ ສຸດແລ້ວແຕ່ຄວາມເຊື່ອ ຂອງແຕ່ລະທ້ອງຖິ່ນ ໂດຍສະເພາະຢູ່ເຂດຊົນນະບົດ ຍັງມີຄວາມເຊື່ອກ່ຽວກັບການມີຜີເຈົ້າບ້ານ ເປັນເຈົ້າອາຮັກສາຫຼັກຄຸນຂອງບ້ານ ເຊິ່ງໝາຍເຖິງ ຜູ້ດູແລຮັກສາໃຫ້ ລູກບ້ານ ມີແຕ່ຄວາມສຸກ, ພົ້ນຈາກສິ່ງທີ່ບໍ່ດີທັງຫຼາຍທັງປວງ ຫຼື ບໍ່ເຈັບໄຂ້ໄດ້ປ່ວຍ. ສະນັ້ນ ພວກເຮົາຈຶ່ງມັກເຫັນວ່າ ຢູ່ບ້ານໃນເຂດຊົນນະບົດ ຈະມີຫໍເຈົ້າບ້ານ ເຊິ່ງຊາວບ້ານ ພ້ອມກັນກໍ່ສ້າງໄວ້ໃຫ້ຜີເຈົ້າບ້ານ. ຈາກນັ້ນ ໃນແຕ່ລະປີ ມີການໄຫວ້ ຫຼື ການຈັດລ້ຽງ ຜີເຈົ້າບ້ານ ເປັນປະຈຳ. ການຈັດລ້ຽງ ຜີເຈົ້າບ້ານນີ້ ເພິ່ນຈະຈັດໃສ່ ເດືອນ 6 ລາວ ວັນອອກໃຫມ່ໃນທຸກໆປີ. ມື້ຫ້າງຫາ ກະກຽມ ເອີ້ນວ່າ “ມື້ພາດໝາກ”. ໃນມື້ນັ້ນ ເຖົ້າແກ່ ລູງຕາ ມາເຕົ້າໂຮມກັນ ຢູ່ເຮືອນຂອງພໍ່ຕູ້ຈ້ຳ ຊຶ່ງເປັນຜູ້ທີ່ຮັບຜິດຊອບນຳພາຊາວບ້ານເຮັດພິທີດັ່ງກ່າວເປັນປົກກະຕິມາ. ຢູ່ເຮືອນພໍ່ຕູ້ຈ້ຳ ຊາວບ້ານທັງຫຼາຍ ພ້ອມພາກັນຫໍ່ເຂົ້າຕົ້ມ, ຈີບໝາກ, ຈີບພູ, ເຮັດບ້າງໃບຕອງ 1000 ບ້າງ, ເຮັດຊວຍ, ເຮັດໝາກເບັງ ດັ່ງນີ້ເປັນຕົ້ນ. ນອກນັ້ນ ກໍຍັງມີ ພາເສື່ອ, ພາຜ້າ, ມີຫວີ, ມີຊ້ອງ, ມີເງິນຮ້ອຍ, ມີເຜີ້ງປ່ຽງ, ມີເຫຼົ້າແກບ, ມີເງິນ, ມີຄຳ ໃສ່ນຳພາເສື່ອ ພາຜ້າ, ມີປືນ 4 ກະບອກ, ມີຫອກ 4 ດວງ ແລະ ຄັນຮົ່ມ 4 ຄັນ. ໃນການກະກຽມນີ້ ພວກຜູ້ເຖົ້າຊາຍ ຍັງເອົາໄມ້ໄຜ່ມາຈັກຕອກເປັນເສັ້ນອ່າວໃຫຍ່ ກວ່າເສັ້ນຕອກ ທຳມະດາໜ້ອຍໜຶ່ງ ຈາກນັ້ນ ຈຶ່ງເອົາມາສານເປັນແຜ່ນ ເອີ້ນວ່າ “ຕາແຫຼວ”. ພໍຮອດ 6 ໂມງແລງ ພໍ່ຕູ້ຈ້ຳ ພ້ອມດ້ວຍລູກບ້ານຈຳນວນໜຶ່ງ ພາກັນຕີຄ້ອງ ອອ້ມບ້ານ ພ້ອມທັງເອົາຕາແຫຼວ ເອ້ຍ້ອງດ້ວຍດອກໄມ້ສີແດງ ໄປປັກໄວ້ ທາງເຂົ້າບ້ານ ເພື່ອເປັນສັນຍາລັກວ່າ ບ້ານນີ້ຈະມີການລ້ຽງຜີເຈົ້າບ້ານ ແລະ ເປັນການແຈ້ງລະບຽບ ຄື ຕະຫຼອດໄລຍະນີ້ ຄົນໃນບໍ່ໃຫ້ອອກ ຄົນນອກ ບໍ່ໃຫ້ເຂົ້າ. ບາງບ້ານກໍ່ມີການຢັ່ງຝ້າຍອ້ອມບ້ານອີກ ນອກຈາກຫຼັກຕາແຫຼວ. ຖ້າຫາກ ມີການລະເມີດ ກໍ່ຈະມີການປັບໃໝ. ການປັບໃໝ ກໍຄື ຜູ້ຖືກປັບໃໝນັ້ນຕ້ອງເອົາສັດຊະນິດ ດຽວກັນກັບທີ່ຊາວບ້ານນຳມາໄຫ້ວ ໃນປີນັ້ນ ມາໄຫວ້ ຫຼື ລ້ຽງຜີເຈົ້າບ້ານ. ຖ້າຜູ້ ທີ່ຖືກປັບໃໝ ບໍ່ຍອມປະຕິບັດຕາມ ກໍອາດຈະມີເຫດຮ້າຍຕ່າງໆນາໆເກີດຂຶ້ນແກ່ຄົນໆນັ້ນ ຕາມຄວາມເຊື່ອຖື ຂອງຊາວບ້ານແຕ່ໃດໃດມາຕະຫຼອດເທົ່າທຸກ ວັນນີ້. ໃນວັນຕໍ່ມາ ເຊິ່ງເປັນ ມື້ລ້ຽງຜີແທ້ໆ ຊາວບ້ານ ກໍພາກັນຂົນ ເອົາເຄື່ອງຂອງທີ່ໄດ້ກະກຽມໄວ້ ແລ້ວນັ້ນ ໄປທີ່ຫໍຜີເຈົ້າອາຮັກສາ ຂອງບ້ານ; ສ່ວນຊາວບ້ານ ແຕ່ລະເຮືອນ ກໍກະກຽມເອົາຕິບເຂົ້າ, ເຫຼົ້າໜຶ່ງແກ້ວ ພ້ອມທັງ ບ້າງ ແລະ ຊວຍ ໄປໂຮມກັນ

ຮູບ 1: ຮູບຫໍ່ຜີ

ຢູ່ທີ່ຫໍ. ພໍເຖິງເວລາ ພໍ່ຕູ້ຈ້ຳ ກໍ່ຍໍ ພາດອກໄມ້ 4 ພາ ພ້ອມດ້ວຍພາເສື້ອ ພາຜ້າ ຂຶ້ນໄປໃນຫໍເພື່ອບູຊາ. ສ່ວນ ອາຫານ ທີ່ນຳມາລ້ຽງຫໍເຈົ້າໃນແຕ່ລະປີ ຈະໝູນວຽນໄປຕາມລຳດັບ ເຊັ່ນວ່າ ປີນີ້ອາຫານທີ່ນຳມາລ້ຽງເປັນໄກ່ ປີຕໍ່ໄປກໍ່ ຈະເປັນໝູ ແລະ ປີຕໍ່ໄປອີກກໍ່ຈະເປັນ ຄວາຍ ແລ້ວຈຶ່ງກັບມາເປັນໄກ່ອີກ ເປັນແບບນີ້ຕະຫຼອດມາ ເຊິ່ງເອີ້ນວ່າ "ສາມປີຮາມສາມປີຄອບ". ຫຼັງຈາກ ອາຫານຕຽມພ້ອມແລ້ວ ກໍ່ຍົກເຂົ້າໄປຖວາຍ ເຈົ້າໃນຫໍ ພ້ອມທັງພາຫວານ 2 ພາ. ຫຼັງຈາກນັ້ນພໍ່ຕູ້ຈ້ຳ ກໍພາຊາວບ້ານເລີ່ມພິທີ ຄືພາກັນຍໍມືຮ້ອງຂໍໃຫ້ ເຈົ້າບ້ານຈົ່ງປົກປັກຮັກສາ ຊາວບ້ານໃຫ້ ຢູ່ເຢັນເປັນສຸກ, ມີສຸຂະພາບແຂງແຮງ, ບໍ່ໃຫ້ສິ່ງທີ່ເປັນໄພຮ້າຍ ມາລົບກວນ ແລະ ເຮັດໃຫ້ການຜະລິດໄດ້ຮັບຜົນດີ.

ຫຼັງຈາກພິທີດັ່ງກ່າວ ໄດ້ຈົບລົງ ທຸກຄົນກໍ່ພ້ອມກັນຄາລະວະ ເພື່ອຂໍຄະມາລາໂທດໃນການກະທຳ ທີ່ຜ່ານມາ, ຖ້າການກະທຳອັນໃດຫາກ ບໍ່ຖືກຕ້ອງ ຫຼື ເປັນການກະທຳຜິດພາດຕໍ່ເພິ່ນ ກໍ່ຂໍໃຫ້ເພິ່ນອະໄພໃຫ້ ບໍ່ໃຫ້ຖືໂທດໂກດເຄືອງ ແລ້ວກໍ່ຍິງປືນ 3 ນັດ. ມາຮອດນີ້ ຖືວ່າ ພິທີລ້ຽງຜີ ເຈົ້າບ້ານຢູ່ທີ່ຫໍເຈົ້າກໍສິ້ນສຸດລົງ.







ພໍຕົກມາຮອດ 6 ໂມງ ຕອນແລງຂອງວັນດຽວກັນ ຊາວບ້ານກໍພາກັນຍິງປືນ, ເຄາະໄມ້ ເຄາະຕອກ ເພື່ອໄລ່ສິ່ງບໍ່ດີອອກໄປຈາກເຮືອນຊານ ຫຼື ໝູ່ບ້ານ. ພ້ອມດຽວກັນນັ້ນແຕ່ລະຄອບຄົວ ກໍ່ພາກັນເຮັດກະໂທງຈາກຕົ້ນກ້ວຍ ແລະ ໃບຕອງ ແລ້ວເອົາເຂົ້າໜຶ້ງມາຈ້ຳຕາມຮ່າງກາຍຂອງສະມາຊິກໃນຄອບຄົວ ເຊິ່ງໝາຍເຖິງການຈ້ຳເອົາພະຍາດພະເຍົາຕ່າງໆ ແລະ ສິ່ງບໍ່ດີທັງຫຼາຍ ທັງປວງ ໃນຮ່າງກາຍອອກໄປ ແລ້ວນຳໄປວາງໃສ່ກະໂທງ ແລະ ນຳກະໂທງໄປໄຫຼນ້ຳ. ຫຼັງຈາກນັ້ນ ກໍ່ໄປຖອດຫຼັກຕາແຫຼວອອກເຊິ່ງເປັນການເປີດບ້ານ ໃຫ້ຄົນ ສັນຈອນໄປມາ ເຂົ້າ ອອກໄດ້ ຕາມປົກກະຕິ. ດອກໄມ້ທີ່ເພິ່ນມັກ ນຳໃຊ້ເຂົ້າໃນການໄຫວ້ຜີທຳເຈົ້າ ແມ່ນດອກທີ່ມີສີແດງ ເປັນຈຸດໜັກ ດັ່ງ ດອກໄໝ່ ເພື່ອເອ້ຍ້ອງແຜ່ນຕາແຫຼວ ແລະ ດອກຝາງ ເພື່ອປັກແຊມ ເອ້ຍ້ອງຕາມທາງເຂົ້າບ້ານ. ບາງບ້ານ ກໍໃຊ້ດອກຊາຍເທີນ, ດອກຈຳປາ ໃສ່ບ້າງ ໃສ່ຊວຍ ກໍມີ. ສ່ວນວ່າດອກສາມປີສີມ້ວງ ຫຼື ສີບົວ ບາງບ້ານກໍໃຊ້ບູຊາຮ້ານຜີທຳເຈົ້າບ້ານ.



ຮູບ 2: ຕາແຫຼວ
ຮູບ 3: ຕາແຫຼວ ຢູ່ທາງ
ຮູບ 4: ດອກຝາງ
ຮູບ 5: ດອກໃໝ່



## ບຸນເຂົ້າພັນສາ

ຄຳວ່າ ພັນສາເຊິ່ງມາຈາກເຄົ້າສັນສະກຼິດ ຫຼື ວັດສາ ມາຈາກເຄົ້າບາລີ ໝາຍເຖິງ ລະດູຝົນ ເຊິ່ງຍາວເຖິງ 4 ເດືອນ ຄືເລີ່ມຕັ້ງແຕ່ເດືອນ 8 ແຮມ 1 ຄ່ຳ ເຖິງເດືອນ 12 ເພັງ. ແຕ່ໃນຈຳນວນ 4 ເດືອນນີ້ ແມ່ນພະພິກຂຸສົງ ເຂົ້າຈຳພັນສາ 3 ເດືອນ. ການເຂົ້າພັນສາ ໄດ້ແກ່ການອະທິດຖານ ຕັ້ງໃຈ ວ່າຈະຂໍຢູ່ໃນອາວາດນີ້ ຫຼື ວ່າ ຢູ່ໃນວັດນີ້ຕະຫຼອດໄຕມາດ (3 ເດືອນ) ເຊິ່ງກົງກັບລະດູຝົນ. ຕາມປົກກະຕິ ວັນເຂົ້າ ພັນສາ ແມ່ນກຳນົດເອົາວັນແຮມ 1 ຄ່ຳ ເດືອນ 8 ເປັນວັນເຂົ້າພັນສາ ຈົນເຖິງເດືອນ 11 ເພັງ ຈຶ່ງເປັນວັນອອກພັນສາ. ຖ້າປີໃດ ຫາກມີເດືອນ 8 ສອງຫົນ ແມ່ນຖືເອົາວັນແຮມ 1 ຄ່ຳ ເດືອນ 9 ເປັນວັນເຂົ້າພັນສາ; ມີຂໍ້ຍົກ ເວັ້ນວ່າ ຖ້າວ່າມີພະພິກຂຸສົງອົງໃດ ຫາກເຈັບໄຂ້ໄດ້ປ່ວຍໃນໄລຍະນີ້ ກໍ່ອະນຸຍາດໃຫ້ ເຂົ້າພັນສາ ໃນເດືອນ 9 ວັນແຮມ 1 ຄ່ຳ ໄດ້ ຈົນຮອດເດືອນ 12 ເພັງຈຶ່ງອອກພັນສາໄດ້. ໃນເດືອນ 8 ມື້ເພັງ ແມ່ນເປັນວັນທີ່ພະພຸດທະຮູບເຂົ້າພັນສາ ພະພິກຂຸສົງສາມະເນນ ໃນວັດ ກໍພາກັນເອົາຂັນດອກໄມ້ ທູບທຽນມາຄາລະວະພະ ເຊິ່ງ ເປັນຕົວແທນຂອງ ພະພຸດທະເຈົ້າ. ສ່ວນ ພະພິກຂຸສົງສາມະເນນນັ້ນ ເມື່ອເຖິງເດືອນ 8 ວັນແຮມ 1 ຄ່ຳ ແລ້ວ ຖ້າອົງໃດບໍ່ເຂົ້າພັນສາ ຫຼື ເຂົ້າແລ້ວ ແຕ່ຮັກສາກົດບໍ່ດີ ເຮັດໃຫ້ພັນສາຂາດກໍຖືວ່າ ຂັດຕໍ່ພະວິໄນຂອງສົງ (ກົດລະບຽບຂອງສົງ). ຄຳອະທິດຖານໃນການເຂົ້າພັນສານັ້ນ ເປັນພາສາບາລີ ວ່າດັ່ງນີ້:“ອິມັສມິງ ອາຣາມມະເຂດເຕ ອິມັງ ເຕມາສັງ ວັດສັງ ອຸເປມິ” ແປວ່າ: “ຂ້າພະເຈົ້າຂໍຕັ້ງໃຈວ່າ ຂໍເຂົ້າຈຳພັນສາໃນອາວາດ ຫຼືວ່າ ໃນວັດນີ້ຕະຫຼອດຄົບ 3 ເດືອນ”. ຖ້າອົງໃດຫາກເຂົ້າພັນສາຄົບ 3 ເດືອນບໍ່ຂາດ ຈະໄດ້ຮັບອານິສົງ (ຜົນປະໂຫຍດ) ເຖິງ 5 ຢ່າງຄື:

- ອອກຈາກວັດໄປໂດຍບໍ່ໄດ້ຄອບ ຫຼື ບໍ່ໄດ້ລາກໍໄດ້ ບໍ່ຖືວ່າຂັດພະວິໄນ.
- ອອກຈາກວັດ ໂດຍບໍ່ຕ້ອງເອົາຜ້າໄຕຈີວອນ (ຜ້າເຫຼືອງ ທີ່ພະສົງໃຊ້ນຸ່ງຫົ່ມ) ໄປຄົບກໍໄດ້ ຖືວ່າບໍ່ຂັດພະວິໄນຂອງສົງ.
- ສັນອາຫານນຳກັນຈຳນວນຫຼາຍໆອົງກໍໄດ້.
- ສາມາດຮັບຜ້າຈີວອນຕື່ມອີກໄດ້ ຖ້າຫາກມີຜູ້ສັດທາມາຖວາຍ.
- ຖ້າມີຜູ້ເອົາຜ້າກະຖິນມາຖວາຍ ກໍມີສິດຮັບໄດ້ໜຶ່ງຊຸດ.

ສ່ວນອານິສົງທັງ 5 ຢ່າງນີ້ ຈະມີຜົນ ນັບຕັ້ງແຕ່ມື້ອອກພັນສາໄປຈົນເຖິງມື້ເພັງຂອງ ເດືອນ 12. ຖ້າຫາກອົງໃດໄດ້ຮັບຜ້າກະຖິນແລ້ວ ອານິສົງທັງ 5 ແຫ່ງມີຜົນແຜ່ ອອກໄປເຖິງ ມື້ເພັງ ຂອງເດືອນ 4 ຈຶ່ງໝົດເຂດອາຍຸຂອງການໃຊ້ສິດທັງ 5 ຢ່າງນີ້.

ຮູບ 1: ນາງ ວິສາຂາ ຖວາຍຜ້ານ້ຳຝົນ



ຕະຫຼອດໄລຍະເຂົ້າພັນສາ ເວລາປະມານ 6-7 ໂມງແລງ ພະພິກຂຸສົງສາມ ມະເນນ ໃນວັດ ຕ້ອງແຕ່ງຂັນດອກໄມ້ທູບທຽນ ໄປຄາລະວະພະພຸດ ທະຮູບ ຄືກັນກັບ ວັນເພັງ 15 ຄໍ່າ ເດືອນ 8. ຫຼັງຈາກນັ້ນ ຈຶ່ງພາກັນມາຄາລະວະນັບແຕ່ຊັ້ນພະມະຫາເຖລານຸເຖລະ (ນັກບວດທັງອົງໃຫຍ່ ແລະ ອົງນ້ອຍ) ລົງມາເປັນລໍາດັບ ຕະຫຼອດຮອດສາມະເນນທຸກໆອົງ. ການຄາລະວະນີ້ ໝາຍເຖິງ ງົດໂທດ ຫຼື ອະໄພໃຫ້ແກ່ກັນ ແລະ ກັນ. ຫຼັງຈາກຄາລະວະແລ້ວ ຈຶ່ງອະທິຖານຄໍາເຂົ້າພັນສາໄດ້. ນອກຈາກນັ້ນພະມະຫາເຖລະ (ເຈົ້າອາວາດໃນວັດ) ຍັງໄດ້ໃຫ້ຄໍາໂອວາດສັ່ງສອນແກ່ພະພິກຂຸສົງສາມະເນນໃນວັດຂອງຕົນອີກວ່າ ເມື່ອເຂົ້າພັນສາແລ້ວ ຕ້ອງພາກັນຕັ້ງໃຈໃຫ້ມີຄວາມໝັ່ນຂະຫຍັນພຽນໃນການສູດມົນ, ລຸກແຕ່ເຊົ້າ ເຮັດກິດຈະວັດປະຈໍາວັນດັ່ງນີ້ເປັນຕົ້ນ. ສ່ວນພວກພໍ່ອອກ ແມ່ອອກ (ຊາວພຸດທັງຫຼາຍ) ກໍພາກັນເຂົ້າພັນສາໄດ້ ໃນເວລາດຽວກັນກັບພະເຂົ້າພັນສາ ເຊິ່ງສ່ວນຫຼາຍ ແມ່ນຕັ້ງໃຈຕໍ່ການສ້າງບຸນກຸສົນໃຫ້ຫຼາຍຂຶ້ນກວ່າເກົ່າ ແລະ ຕັ້ງໃຈຖືເອົາຂໍ້ປະຕິບັດໃດໜຶ່ງກໍໄດ້ ເຊັ່ນວ່າ: ຂໍຕັ້ງໃຈເອົາເຂົ້າໃສ່ບາດຕະຫຼອດ 3 ເດືອນກໍໄດ້, ຂໍຕັ້ງໃຈຮັບສິນ 5 ຕະຫຼອດເວລາ 3 ເດືອນກໍໄດ້, ຂໍຕັ້ງໃຈມາ





ຟັງທຳມະເທດສະໜາບໍ່ຂາດຕະຫຼອດ 3 ເດືອນກໍໄດ້ ຫຼື ຕັ້ງໃຈຂໍຖວາຍທານແກ່ພະສົງ ໃນວັນສິນ ຄື ວັນ 8 ຄ່ຳ ຫຼື ວັນ15 ຄ່ຳ ຕະຫຼອດ 3 ເດືອນກໍໄດ້. ນອກຈາກນີ້ແລ້ວຍັງ ມີຫຼາຍຢ່າງ ທີ່ສາມາດຖືເອົາມາເປັນຂໍ້ປະຕິບັດໃນໄລຍະເວລາເຂົ້າພັນສາໄດ້ ສຸດແລ້ວ ແຕ່ສັດທາຂອງເຮົາເອງ ຫຼື ວ່າຈະອະທິດຖານໃນໃຈວ່າ ຈະບໍ່ດື່ມເຫຼົ້າ ເມົາສຸລາ, ຈະສ້າງ ແຕ່ຄວາມດີ, ບໍ່ຮ້າຍບໍ່ເຄືອງໃຜ ຕະລອດ 3 ເດືອນນີ້ກໍໄດ້. ການເຂົ້າພັນສານີ້ ມີຜົນ ປະໂຫຍດແກ່ຍາດໂຍມຫຼາຍຢ່າງອີກດ້ວຍ. ມີນິທານເລື່ອງໜຶ່ງ ທີ່ໄດ້ກ່າວໄວ້ກ່ຽວ ກັບບຸນເຂົ້າພັນສາ ດັ່ງ: ໃນອະດີດຕະການທີ່ຜ່ານມານານແລ້ວ ຄັ້ງເມື່ອພະສຳມາ ສຳພຸດທະເຈົ້າ ປະທັບຢູ່ໃນວັດ ເວຣູວັນ ເມືອງຣາຊຄຶ ມີພວກອອກຕົນຍາດໂຍມ ທັງຫຼາຍ ມາກາບທູນພະອົງວ່າ ໃນເວລານີ້ ເປັນລະດູຝົນ ແລະ ຄົນທັງຫຼາຍເຮັດນາ ບາງຄົນກໍເຮັດຄັນນາໃໝ່ໆ, ມົດ ໝູ ປູ ແມງ ກໍ່ອອກໄຂ່ ແຜ່ພັນມາກມາຍ ແຕ່ພະພິກ ຂຸສົງ ກໍອອກທ່ຽວໄປ ມາ ແລະ ຢຽບຄັນນາ ຫຼື ຕົ້ນກ້າ ຕົ້ນເຂົ້າ ແລະ ເຄື່ອງປູກຂອງຝັງ ຂອງຊາວບ້ານ ໃຫ້ເພພັງ ໄດ້ຮັບຄວາມເສຍຫາຍ. ເມື່ອພະພຸດທະເຈົ້າຮູ້ຄວາມຈິງຄື ແນວ ນັ້ນ ຈຶ່ງອອກກົດລະບຽບວ່າ ໃຫ້ພະພິກຂຸສົງຈຳພັນສາ ນັບແຕ່ວັນແຮມຄ່ຳໜຶ່ງ ເດືອນ 8 ຈົນເຖິງເດືອນ 11 ເພັງ ເຊິ່ງເປັນໄລຍະກົງກັບຊ່ວງລະດູຝົນ ທີ່ຊາວບ້ານ ກຳລັງເຮັດໄຮ່ເຮັດນາກັນ. ໃນໂອກາດ ບຸນເຂົ້າພັນສານີ້ ຊາວພຸດທັງຫຼາຍກໍມັກຈະ ຖວາຍທານ ຜ້າອາບນ້ຳຝົນ ໃຫ້ແກ່ພະພິກຂຸສົງ ເພື່ອນຳໃຊ້ໃນໄລຍະເຂົ້າພັນສາ. ດອກໄມ້ທີ່ເພິ່ນມັກນຳໃຊ້ ເຂົ້າໃນພິທີບຸນເຂົ້າພັນສາ ແມ່ນດອກໄມ້ທີ່ມີສີຂາວ ເປັນ ສ່ວນຫຼາຍ ດັ່ງ ດອກພຸດ, ດອກອິນທະຫວາ, ດອກຊ້ອນ, ດອກດາວເຮືອງ .... ດັ່ງນີ້ ເປັນຕົ້ນ ສຳລັບໃສ່ຂັນຫ້າ ຂັນແປດ, ໃສ່ບ້າງ ໃສ່ຊວຍ, ເອ້ໝາກເບັງ. ພິເສດ ດອກໄມ້ ທີ່ຊາວພຸດມັກໃສ່ໃນບາດສະຫວັນ ໃນໂອກາດ ບຸນເຂົ້າ ພັນສານີ້ ແລະ ທັງບູຊາພະ ແມ່ນດອກບົວຫຼວງ ສີຂາວ ດັ່ງ ຮູບຂ້າງລຸ່ມນີ້.

ຮູບ 2: ດອກກາງຂອງ

ຮູບ 3: ດອກດາວເຮືອງ

ຮູບ 4: ດອກບົວຫຼວງ







## ບຸນຫໍ່ເຂົ້າປະດັບດິນ

ໃນທາງສາສະໜາພຸດ ບຸນຫໍ່ເຂົ້າ ຈັດຂຶ້ນສອງເທື່ອໃນແຕ່ລະປີ ເຊັ່ນ ບຸນຫໍ່ເຂົ້າສະຫຼາກ,
ບຸນຫໍ່ເຂົ້າປະດັບດິນ ກໍ່ເປັນປະເພນີສືບເນື່ອງກັນມາແຕ່ບູຮານນະການຂອງຊາວລາວ,
ຊາວພຸດໄທ ແລະ ກຳປູເຈຍ. ຕາມປະເພນີ ເພິ່ນຈັດ ບຸນຫໍ່ເຂົ້າປະດັບດິນກ່ອນບຸນຫໍ່
ເຂົ້າສະລາກ ເຊິ່ງກົງກັບວັນແຮມ 14 ຄ່ຳເດືອນ 9. ເຈົ້າຮູ້ບໍ່ວ່າ ກ່ອນທີ່ຊາວລາວເຮົານີ້
ຈະພາກັນເຮັດບຸນຫໍ່ເຂົ້າປະດັບດິນ ເປັນປະເພນີສືບເນື່ອງກັນມາເທົ່າທຸກວັນນີ້ກໍ່ເພາະ
ວ່າມີຄວາມ ເຊື່ອອັນພື້ນຖານຢ່າງໜຶ່ງ ດັ່ງຄົນເຮົາ ຫຼື ສັດທັງຫຼາຍ ເມື່ອຍັງມີຊີວິດຢູ່
ຖ້າສ້າງ ຄວາມດີໄວ້ ຫຼື ເວົ້າວ່າມີກຳດີ ເມື່ອຕາຍໄປ ກໍຈະໄດ້ ຂຶ້ນຢູ່ເທິງສະຫວັນຊັ້ນຟ້າ
ບ່ອນທີ່ມີແຕ່ຄວາມສະໜຸກສຸກສະບາຍ; ຖ້າຫາກ ສ້າງແຕ່ກຳຊົ່ວໄວ້ ເມື່ອຕາຍໄປ
ກໍ່ຈະໄປຕົກຢູ່ໝົ້ນະຣົກ ເຊິ່ງເປັນບ່ອນທີ່ມີແຕ່ ຄວາມທຸກ ຄວາມຍາກ ຄວາມອຶດຢາກ
ທຸກທໍລະມານ ເພາະຖືກໄຟໝົ້ນະຣົກລວກ ຫຼື ໃໝ້ເຜົາ ອຶດເຂົ້າ ອຶດນ້ຳ. ກ່ຽວກັບບຸນ
ຫໍ່ເຂົ້າປະດັບດິນນີ້ ມີນິທານເລົ່າຕໍ່ກັນມາວ່າມີວັນໜຶ່ງ ມີພະອໍລະຫັນອົງໜຶ່ງ (ຜູ້ເຖິງນິບ
ພານ) ທີ່ມີລິດແກ່ກ້າ ສາມາດ ດຳດິນ ບິນບົນ ເຫາະເຫີນເດີນອາກາດໄດ້, ໄດ້ດຳດິນ
ລົງໄປສູ່ຍົມມະໂລກ ກໍຄື ເມືອງນະຣົກນັ້ນເອງ. ພະອົງໄດ້ເຫັນໄຟໝົ້ນະຣົກລຸກໃໝ້
ກຸ້ມໄປໝົດ ແລະ ໄດ້ຍິນສຽງຮ້ອງໄຫ້ຟົດສະໜັ່ນເນື່ອງນັນ ຂອງພວກສັດນະຣົກ ທັງ
ຫຼາຍ ເຊິ່ງກຳລັງຖືກນ້ຳຮ້ອນລວກ ແລະ ໄຟເຜົາຢູ່, ພະອົງໄດ້ເປົ່າມົນໃສ່ໝົ້ນະຣົກ
ໄຟກໍມອດໝົດ, ສ່ວນນ້ຳຮ້ອນໃນໝົ້ນະຣົກ ກໍເຢັນລົງ ຈຶ່ງເຮັດໃຫ້ພະອົງແນມເຫັນ
ຝູງສັດນະຣົກເຫຼົ່ານັ້ນ ຜູ້ເປັນຍາດ ກໍມີ, ເປັນມິດສະຫາຍ ກໍມີ ແລະ ເປັນຄົນອື່ນໆ
ທີ່ບໍ່ຮູ້ຈັກ ກໍມີ. ສັດນະຣົກເຫຼົ່ານີ້ ມີຮູບຮ່າງ ໜ້າຕາ ເປັນຕາຢ້ານ ເປັນຕາໜ່າຍຢູ່
ກັນແໜ້ນຄັບຄັ່ງ ແລະ ທົນທຸກຢູ່ໃນໝົ້ນະຣົກ ຢ່າງໜ້າສົມເພດເວດທະນາ ຫຼາຍ
ແທ້ໆ. ເມື່ອສັດນະຣົກທັງຫຼາຍ ໄດ້ເຫັນພະອໍລະຫັນເຈົ້າ ມີລິດເດດເກັ່ງກ້າ ກໍພາກັນ
ຍົກມືໄຫວ້ ແລະ ອ້ອນວອນວ່າ “ຂໍໃຫ້ພະອົງຊ່ວຍພວກຂະນ້ອຍ ໃຫ້ພົ້ນທຸກແດ່ຖ້ອນ
ພວກຂະນ້ອຍໄດ້ທົນທຸກຢູ່ໃນໝົ້ນະຣົກນີ້ ບໍ່ຮູ້ວ່າວັນໃດຈະໄດ້ ພົ້ນຈາກທຸກ” ເມື່ອພະ
ອໍລະຫັນເຈົ້າ ຮັບຮູ້ຄືແນວນັ້ນ ກໍ່ຮັບປາກວ່າຈະຫາວິທີ ຊ່ວຍໃຫ້ພົ້ນທຸກ ແລ້ວກໍ່ລາ
ຈາກພວກສັດນະຣົກທັງຫຼາຍ ເພື່ອໄປພົບກັບ ພະຍາ ຍົມມະລາດ ຫຼື ຈ່າຍົມພະບານ
ນັ້ນເອງ. ພະອົງໄດ້ຖາມຈ່າຍົມພະບານວ່າ ເປັນຫຍັງທ່ານຈຶ່ງໄດ້ລົງໂທດພວກສັດນະ
ຣົກ ໃຫ້ທຸກທໍລະມານຫຼາຍ ແທ້ ໂດຍທີ່ບໍ່ມີຄວາມເມດຕາປານີເລີຍ. ພະຍາຍົມພິບານ
ກໍຕອບວ່າ ບໍ່ແມ່ນ ພວກຂ້ານ້ອຍຢາກລົງໂທດພວກສັດນະຣົກເຫຼົ່ານີ້ ແຕ່ຫາກເປັນຜົນ
ກຳ ຂອງ ພວກເຂົາສ້າງໄວ້ເອງ ຈຶ່ງໄດ້ມາຕົກໝົ້ນະຣົກເຊັ່ນນີ້ ຈົນກວ່າພວກເຂົາໝົດ

ຮູບ 1: ຊາວພຸດທັງຫຼາຍຟັງທຳມະເທດສະໜາ

ກຳ ພຸ້ນແລ້ວ ຈຶ່ງຈະພົ້ນຈາກທຸກ. ພະອໍລະຫັນ ກໍຖາມວ່າຖ້າເປັນແນວນັ້ນ ຈະມີວິທີຊ່ວຍເຫຼືອເຂົາເຈົ້າແນວໃດ ? ຈ່າຍົມພະບານ ຕອບວ່າ ມີວິທີຢູ່ ຄືໃນເດືອນ 9 ດັບ (ວັນດັບ 15 ຄ່ຳ ຂອງເດືອນ 9) ຂອງທຸກໆປີ ພວກສັດ ນະຮົກເຫຼົ່ານີ້ ກໍຈະຖືກປ່ອຍຄັ້ງໜຶ່ງ ຕັ້ງແຕ່ເວລາ 4 ໂມງເຊົ້າ ຈົນຕະຫຼອດວັນ ເພື່ອໃຫ້ ໄປຫາກິນອາຫານນຳຍາດຕິພີ່ນ້ອງ ທີ່ເຮັດບຸນອຸທິດ ໃຫ້ເຂົາເຈົ້າ, ຜູ້ທີ່ມີກຳເບົາເມື່ອໄດ້ຮັບບຸນກຸສົນແລ້ວອາດພົ້ນຈາກທຸກໄດ້ ແລະ ໄປເກີດ ເລີຍກໍມີ ແຕ່ສ່ວນຜູ້ທີ່ມີກຳຫຼາຍກໍຈະໄດ້ກັບໄປຢູ່ ໃນໝໍ້ນະຮົກຄືນຄືເກົ່າ. ເມື່ອພະອໍລະຫັນຮັບຮູ້ຄວາມເປັນຈິງກໍກັບຂຶ້ນມາເມືອງມະນຸດ ແລະ ເມື່ອພະອໍລະຫັນຈາກໄປແລ້ວໄຟນະຮົກກໍໃໝ້ຄືນເໝືອນເດີມ. ເມື່ອມາເຖິງເມືອງມະນຸດ ພະອົງກໍໄດ້ປ່າວປະກາດ ແກ່ບັນດາຊາວພຸດທັງຫຼາຍວ່າ “ຖ້າຜູ້ໃດ ມີຈຸດປະສົງຈະສົ່ງບຸນຫາຍາດຕິພີ່ນ້ອງ ທີ່ຕາຍໄປແລ້ວ ເຊິ່ງອາດຈະຍັງ ທົນທຸກທໍລະມານຢູ່ໃນໝໍ້ນະຮົກນັ້ນ ໃຫ້ພາກັນອຸທິດສົ່ງບຸນໃນວັນແຮມ15ຄ່ຳ ເດືອນ 9 (ເດືອນ 9 ດັບ) ເພາະວ່າ ໃນວັນນີ້ ຈ່າຍົມພະບານ ໄດ້ປ່ອຍສັດນະຮົກອອກມາຮັບເອົາສ່ວນບຸນຈາກຍາດພີ່ນ້ອງ ຕະຫຼອດທັງວັນ. ໃນວັນດັ່ງກ່າວນີ້ ຖ້າຜູ້ໃດຫາກບໍ່ເຮັດບຸນຫໍ່ເຂົ້າປະດັບດິນ ເພື່ອອຸທິດໃຫ້ຍາດແລ້ວ ພວກຍາດທັງຫຼາຍທີ່ຕົກຢູ່ໃນໝໍ້ນະຮົກນັ້ນ ກໍບໍ່ໄດ້ຮັບສ່ວນບຸນກຸສົນ ແລະ ກໍພາກັນຮ້ອງໄຫ້ໄປມາແລ້ວກໍທ່ຽວຫາຂໍກິນນຳຄົນອື່ນທີ່ມີຍາດພີ່ນ້ອງ ເຮັດບຸນກິນທານອຸທິດໃຫ້ ຫຼື ບໍ່ກໍໄປຫາເລັມໃບຕອງ ເພື່ອກິນອາຫານເສດເຫຼືອຂອງຜູ້ອື່ນ ທັງປ້ອຍດ່າ ຕິຕຽນຍາດຕິພີ່ນ້ອງ ທີ່ຢູ່ໃນເມືອງມະນຸດ ໃຫ້ພົບກັບຄວາມທຸກຍາກລຳບາກນານາປະການ. ເມື່ອໝົດເວລາ ຈ່າຍົມພະບານ ກໍມາປ້ອງກັບຄືນໄປຢູ່ໃນໝໍ້ນະຮົກຄືເກົ່າ. ດ້ວຍເຫດນີ້ ພວກເຮົາຊາວພຸດ ຈຶ່ງໄດ້ພາກັນເຮັດບຸນຫໍ່ເຂົ້າປະດັບດິນ ມາຈົນເທົ່າທຸກວັນນີ້ແລ. ສິ່ງຂອງຕ່າງໆ  ທີ່ນຳມາໃສ່ຫໍ່ເຂົ້າກໍມີກ້ວຍ, ອ້ອຍ, ໝາກກ້ຽງ, ໝາກອຶ່ໜຶ້ງ, ໝາກນ້ຳໜຶ້ງ, ໝາກບົກ, ໝາກເຄັງ, ເຜືອກໜຶ້ງ, ມັນໜຶ້ງແລະ ເຂົ້າຕົ້ມ ເຂົ້າໜົມຕ່າງໆ, ສ່ວນອາຫານຄາວ ກໍມີປາປີ້ງ ຫຼື ຊີ້ນປີ້ງ. ນອກຈາກນັ້ນກໍມີຄຳໝ້ຽງ ແລະ ຄຳໝາກ. ເຄື່ອງທັງໝົດ ເຮັດເປັນຕ່ອນນ້ອຍ ແລ້ວນຳມາຫໍ່ ລວມກັນ ໃນໃບຕອງ. ພໍຕົກ ຕອນເຊົ້າມືດຂອງວັນແຮມ 15 ຄ່ຳ ກໍພາກັນເອົາຫໍ່ເຂົ້າ ໄປຢາຍໄວ້ຕາມແຄມປະຕູບ້ານ,  ຮົ້ວບ້ານ, ຄີໄຟ, ງ່າໄມ້ ພາຍໃນເຂດບ້ານ ຫຼື ໃນວັດ, ຕາມຮົ້ວວັດ ດັ່ງນີ້ເປັນຕົ້ນ. ພໍຮຸ່ງເຊົ້າມາ ກໍພາກັນໄປວັດ ເພື່ອຕັກບາດຮັບ

ຮູບ 2: ເຄື່ອງປະກອບໃນຫໍ່ເຂົ້າ

1 ຫມາກກ້ວຍ
2 ຫມາກກ້ຽງ
3 ຫມາກອຶໜຶ້ງ
4 ຫມາກນ້ຳຫນຶ້ງ
5 ຫມາກບົກ
6 ຫມາກເຄັງ
7 ເຜືອກຫນຶ້ງ
8 ມັນຫນຶ້ງ
9 ເຂົ້າຕົ້ມເຂົ້າຫນົມຕ່າງໆ
10 ປາປີ້ງ
11 ຊີ້ນປີ້ງ





ສິນ ແລ້ວຢາດນ້ຳອຸທິດສ່ວນບຸນກຸສົນໃຫ້ ແກ່ຍາດພີ່ນ້ອງ ທີ່ຕາຍໄປແລ້ວນັ້ນໃຫ້ພົ້ນຈາກທຸກ ແລະ ທັງເປັນບຸນກຸສົນໃຫ້ແກ່ຕົວເອງດ້ວຍ. ດອກໄມ້ທີ່ເພິ່ນມັກນຳໃຊ້ເຂົ້າໃນພິທີບຸນເຂົ້າປະດັບດິນ ແມ່ນ ດອກໄມ້ທີ່ມີສີຂາວ ເປັນສ່ວນຫຼາຍ ດັ່ງ ດອກພຸດ, ດອກອິນທະຫວາ, ດອກຊ້ອນ ແລະ ສີອື່ນໆ ເຊັ່ນ: ດອກດາວເຮືອງ .... ດັ່ງນີ້ເປັນຕົ້ນ ສຳລັບໃສ່ຂັນຫ້າ ຂັນແປດ, ໃສ່ບ້າງ ໃສ່ຊວຍ, ເອ້ພາກເບັງ. ພິເສດ ດອກໄມ້ທີ່ຊາວພຸດມັກໃສ່ໃນບາດ ສະຫວັນ ໃນໂອກາດບຸນນີ້ ແລະ ບູຊາພະ ແມ່ນດອກບົວຫຼວງ.





ຮູບ 3: ຮູບດອກຊ້ອນ
ຮູບ 4: ຮູບຕົ້ນໂພ



## ບຸນຫໍ່ເຂົ້າສະຫຼາກ

ຊາວພຸດທັງຫຼາຍ ຈັດບຸນຫໍ່ເຂົ້າສະຫຼາກ ຫຼັງບຸນຫໍ່ເຂົ້າປະດັບດິນ ໃນມື້ເພັງ 15 ຄ່ຳ ເດືອນ 10 (ເດືອນ10 ເພັງ). ວິທີເຮັດບຸນຫໍ່ເຂົ້າສະຫຼາກກໍມີອັນຄ້າຍໆກັບການເຮັດບຸນອື່ນ : ເມື່ອເຖິງ ວັນຂຶ້ນ 14 ຄ່ຳ ຂອງເດືອນ 10 ຜູ້ຄົນທັງຫຼາຍ ເຊິ່ງໃນທາງສາສະໜາພຸດ ມັກເອີ້ນກັນວ່າ "ອອກຕົນ ຍາດໂຍມ" ກໍ່ພາກັນທ້າງຫາກະກຽມເຄື່ອງຂອງທີ່ຈະນຳໄປທານ ເຊັ່ນວ່າ ຫໍ່ເຂົ້າຕົ້ມ ໄສ້ເປັນໝາກກ້ວຍ ຫຼື ໄສ້ຖົ່ວຂຽວ ຫຼື ອື່ນໆ, ນອກຈາກນັ້ນ ກໍຍັງ ມີອາຫານຄາວ ອາຫານຫວານຕ່າງໆ ຕາມກຳລັງ ສັດທາຂອງຕົນ, ແຕ່ສ່ວນຫຼວງຫຼາຍ ໃນໂອກາດນີ້ ຜູ້ຄົນມັກກຽມເປັນພາເຂົ້າທິບ ຊຶ່ງປະກອບດ້ວຍ ທັງອາຫານຄາວ ທັງອາຫານຫວານ ໂດຍສະເພາະ ແມ່ນສິ່ງທີ່ ຜູ້ເພິ່ນກຳລັງເຮັດທານຫາ ມັກເປັນພິເສດໃນຍາມເພິ່ນໄດ້ມີຊີວິດຢູ່.

ສິ່ງຂອງຕ່າງໆ ນອກຈາກພາເຂົ້າ ຫຼື ເອີ້ນວ່າ "ວັດຖຸທານ" ເພິ່ນມັກ ຈະຕົບແຕ່ງເຂົ້າໃນກວາຍໄມ້, ແຕ່ໃນປັດຈຸບັນ ໃນຕົວເມືອງເພິ່ນມີທ່າອ່ຽງ ນຳໃຊ້ຊຸຍາງແທນກວາຍໄມ້. ໃນກວາຍ ເພິ່ນຈະຂຽນສະຫຼາກຕິດໃສ່ ວ່າຂອງທານເຫຼົ່ານີ້ ຈະທານ ຫຼື ອຸທິດໄປໃຫ້ຍາດໂຍມຄົນໃດແດ່ ທີ່ລ່ວງລັບ ໄປແລ້ວ. ນອກຈາກນັ້ນ ເພິ່ນກໍຍັງອຸທິດຫາ ສິ່ງມີຊີວິດອື່ນໆ ທີ່ເພິ່ນອາດຈະ ໄດ້ຂ້າ ຫຼື ໄດ້ທຳລາຍແຕ່ເກົ່າຄືນຫຼັງມາ ເພື່ອໃຫ້ສິ່ງມີຊີວິດເຫຼົ່ານັ້ນ ໄດ້ຢູ່ດີມີສຸກ ແລະ ບໍ່ໃຫ້ມີຄວາມແຄ້ນເຄືອງ ຫຼື ມີກຳມີເວນຕໍ່ກັນ. ພໍຕື່ນເຊົ້າຂຶ້ນມາ ເປັນມື້ເພັງ 15 ຄ່ຳ ເດືອນ 10 (ເປັນວັນພະຈັນເຕັມດວງ) ອອກຕົນຍາດໂຍມທັງຫຼາຍກໍນຳເອົາວັດຖຸທານຕ່າງໆທີ່ໄດ້ທ້າງຫາກະກຽມໄວ້ນັ້ນໄປສູ່ວັດ ແລະ ຖວາຍໃຫ້ແກ່ ພະພິກຂຸສົງ ແລ້ວກໍມີການໄຫ້ວພະ ຮັບສິນ ແລະ ໃສ່ບາດ. ເມື່ອພິທີຕັກບາດສຳເລັດແລ້ວ ສາລະວັດກໍ່ຮິບໂຮມເອົາໃບສະຫຼາກ ທີ່ພວກເພິ່ນໄດ້ຂຽນໄສ່ໃນກວາຍນັ້ນໄວ້ ເພື່ອໃຫ້ພະພິກຂຸສົງ ໄດ້ຈົກສະຫຼາກ. ຖ້າຖືກສະຫຼາກຂອງເຈົ້າ ສັດທາຄົນໃດກໍຮັບຂອງທານ ຂອງເຈົ້າສັດທາຄົນນັ້ນໄປ ແລ້ວຈຶ່ງອຸທິດບຸນກຸສົນໄປໃຫ້ຍາດຕິພີ່ນ້ອງ ທີ່ໄດ້ລະບຸຊື່ໄວ້ໃນສະຫຼາກ. ຄຳຖາມ ມີຢູ່ວ່າ: ເປັນຫຍັງຊາວພຸດຕ້ອງເຮັດບຸນຫໍ່ເຂົ້າ ສະຫຼາກ ຈົນເປັນປະເພນີສືບຕໍ່ກັນມາແຕ່ບູຮານນະການຈົນເຖິງປັດຈຸບັນ. ມີ ນິທານເລື່ອງໜຶ່ງ ທີ່ກ່າວເຖິງທີ່ມາຂອງບຸນເຂົ້າສະຫຼາກວ່າ: ໃນອະດີດຕະການຄັ້ງໜຶ່ງ ຄັ້ງເມື່ອພະສຳມາສຳພຸດທະເຈົ້າ ຊົງປະທັບຢູ່ໃນວັດປ່າ ເຊຕະວັນ, ແມ່ເຖົ້າຄົນໜຶ່ງໄດ້ຫາເມຍໃຫ້ ລູກຊາຍຂອງລາວ. ສອງຜົວເມຍຢູ່ກິນ ຮ່ວມກັນເປັນເວລາ

ຮູບ 1: ຮູບການຕັກບາດໃຫ້ທານອຸທິດສ່ວນບູນກຸສົນໃຫ້ແກ່ຜູ້ລ່ວງລັບໄປແລ້ວ

ນານ, ແຕ່ກໍບໍ່ມີລູກຈັກເທື່ອ. ຜົວຢາກໄດ້ລູກ ຈຶ່ງປຶກສາ ນຳເມຍວ່າ ຢາກໄດ້ເມຍໃໝ່ ມາເປັນ ຜູ້ທີ່ສອງ ພໍຈະມີໂອກາດມີລູກມາສືບທອດວົງຕະກຸນ, ສ່ວນເມຍໃຫຍ່ກໍ ຄິດວ່າ ຖ້າຜົວເອົາເມຍໃໝ່ ກໍຢ້ານເມັຍໃໝ່ ຈະມາເປັນໃຫຍ່ແທນຕົນເອງໃນຄອບຄົວ ກໍເລີຍອາສາຈະເປັນ ຜູ້ຫາເມຍໃໝ່ ໃຫ້ຜົວເອງ. ເມື່ອຜົວໄດ້ເມຍຜູ້ທີ່ສອງ ອີກບໍ່ນານ ກໍໄດ້ລູກນຳກັນ. ເມື່ອເລີ້ມ ຕັ້ງທ້ອງ ຜູ້ເມຍໃໝ່ກໍແຈ້ງບອກຂ່າວດີຕໍ່ກັບເມຍໃຫຍ່, ແຕ່ເມຍ ໃຫຍ່ກໍ່ຊ້ຳພັດຢ້ານວ່າ ເມຍນ້ອຍ ຈະມາເປັນໃຫຍ່ ຄອບຄອງເຮືອນຊານ ກໍເລີຍເອົາຢາຫຼຸລູກ ໃຫ້ເມຍນ້ອຍກິນ ໂດຍຕົວະວ່າເປັນຢາບຳລຸງ ອັນໄດ້ເຮັດໃຫ້ ເມຍນ້ອຍຫຼຸລູກທັນທີທັນໃດ. ເມື່ອເມຍນ້ອຍ ຕັ້ງທ້ອງຄັ້ງທີສອງ ເມຍໃຫຍ່ກໍເອົາ ຢາໃຫ້ກິນເຊັ່ນດຽວ. ຈາກນັ້ນ ເມື່ອເມຍນ້ອຍຕັ້ງທ້ອງຄັ້ງທີ່ສາມ ລາວຈຶ່ງບໍ່ບອກ ເມຍຫຼວງເລີຍ. ເມື່ອລາວ ໄກ້ຈະຄອດລູກ ເມຍຫຼວງຮູ້ກໍບັງຄັບໃຫ້ກິນຢາອີກ, ແຕ່ຄັ້ງນີ້ ທັງແມ່ ແລະ ລູກ ໄດ້ຕາຍ ໄປພ້ອມກັນ. ກ່ອນຕາຍ ເມຍນ້ອຍໄດ້ອະທິດຖານ ຜູກເວນ ຜູກກຳ ໄວ້ໃຫ້ກັບເມຍຫຼວງວ່າ ຂ້າພະເຈົ້າ ເກີດມາໃນຊາດໃດໆ ກໍຕາມ ຂໍໃຫ້ໄດ້ຂ້າລູກຂອງຜູ້ຍິງຄົນນີ້ທຸກຊາດ ແລ້ວລາວກໍ່ຕາຍ ເມື່ອ ເມຍນ້ອຍຕາຍແລ້ວ ກໍໄປເກີດເປັນແມວ ຢູ່ກັບເຮືອນຫຼັງນີ້ຄືເກົ່າ. ພາຍຫຼັງມາເມື່ອຜົວ ຮູ້ວ່າ ເມຍນ້ອຍຕາຍ ເພາະເມຍຫຼວງເອົາຢາໃຫ້ກິນ ກໍເລີຍຕີ ເມຍຫຼວງຈົນຕາຍ.ເມື່ອເມຍຫຼວງຕາຍໄປແລ້ວ ກໍມາເກີດເປັນແມ່ໄກ່ ຢູ່ໃນເຮືອນຫຼັງດຽວກັນ. ເມື່ອແມ່ໄກ່ນັ້ນໃຫຍ່ມາແລ້ວອອກໄຂ່ ຊຸດທີໜຶ່ງ, ຊຸດທີສອງ ແມວກໍ່ມາກິນໝົດ; ອອກຊຸດທີ່ສາມ ແມວກໍມາກິນທັງລູກໄກ່ ແລະ ແມ່ໄກ່ພ້ອມ. ກ່ອນຕາຍ ແມ່ໄກ່ ກໍໄດ້ຜູກກຳຜູກເວນໄວ້ກັບແມວໂຕນີ້ເໝືອນ ກັນແລ້ວກໍຕາຍ. ຕໍ່ມາຈຶ່ງມາເກີດເປັນເສືອເຫຼືອງ ຢູ່ໃນປ່າແຫ່ງໜຶ່ງ; ສ່ວນ ແມວ ກໍຕາຍໄປ ແລວ້ມາເກີດເປັນກວາງ ຢູ່ໃນປ່າແຫ່ງດຽວກັນ. ກວາງ ອອກລູກມາ 2 ຄັ້ງ ເສືອກໍມາກິນໝົດ; ອອກມາຄັ້ງທີ່ 3 ກໍມາກິນທັງລູກທັງແມ່ກວາງ. ກວາງຕາຍໄປ ແລ້ວ ກໍເກີດມາເປັນນາງຍັກຂີນີ; ສ່ວນເສືອ ຕາຍໄປແລ້ວກໍເກີດມາເປັນນາງກຸຣະທິດາ ຢູ່ໃນເມືອງນັ້ນເອງ. ເມື່ອ ນາງ ກຸຣະທິດາໃຫຍ່ມາແລ້ວ ແຕ່ງງານໄດ້ລູກອອກມາ 2 ຄັ້ງ ນາງຍັກຂີນີ ກໍມາກິນໝົດ. ເມື່ອຄັ້ງທີ 3 ນາງ ກຸຣະທິດາ ຢ້ານນາງຍັກຂີນີມາກິນລູກອີກ ກໍເລີຍ ຊວນຜົວໜີໄປຢູ່ເຮືອນປູ່ຍ່າ ແລ້ວນາງກໍຄອດລູກອອກມາ. ເມື່ອລູກໃຫຍ່ ແຂງແຮງພໍສົມຄວນແລ້ວ ນາງກໍເລີຍຊວນຜົວກັບມາຢູ່ ເຮືອນຂອງຕົນເອງ. ໃນລະຫວ່າງທາງນັ້ນ ນາງ ແລະ ຜົວ ໄດ້ເຫັນສະນ້ຳ ກໍເລີຍຊວນຜົວ ລົງອາບນ້ຳ ໂດຍຜັດປ່ຽນກັນເອົາລູກ. ໃນເວລານັ້ນ ນາງຍັກຂີນີຕາມມາທັນຈະກິນລູກພ້ອມດ້ວຍ ນາງກຸຣະທິດາ. ນາງກຸຣະທິດາ ຈຶ່ງໄດ້ເອີ້ນບອກຜົວວ່າ ນາງຍັກຂີນີ ໂຕນີ້ ເຄີຍກິນລູກ ຂອງເຮົາ. ເວລານັ້ນທັງ ຜົວ ແລະ ເມຍ ກໍ ພາກັນອູ້ມລູກແລ່ນເຂົ້າໄປໃນວັດປ່າເຊຕະວັນ ເພື່ອເພິ່ງບຸນຂອງ ພະພຸດທະເຈົ້າ. ເມື່ອນາງຍັກຂີນີ ແລ່ນຕາມໄປເຖິງໜ້າວັດ ເລີຍບໍ່ກ້າ





ຮູບ 2: ຮູບກວາຍເຂົ້າສະຫຼາກ ແລະ ເຄື່ອງທານ

ເຂົ້າໄປ ເພາະວ່າຢ້ານອຳນາດ ຂອງຄຸນພະທີ່ກຳລັງສະແດງພະທຳມະເທດສະໜາ ໃຫ້ແກ່ຜູ້ຄົນທັງຫຼາຍຢູ່. ໃນເມື່ອ ພະພຸດທະເຈົ້າຮັບຮູ້ເລື່ອງແລ້ວ ພະອົງກໍໃຫ້ ພະອານົນ ທີ່ເປັນຜູ້ຕິດຕາມພະອົງ ອອກໄປເອີ້ນນາງຍັກຂິນີເຂົ້າມາຫາ ແລ້ວພະອົງກໍບອກ ໃຫ້ນາງ ຍັກຂິນີ ແລະ ນາງກຸຣະທິດາ ຮູ້ວ່າທັງສອງ ເປັນຄູ່ກຳຄູ່ເວນກັນມາແຕ່ຊາດປາງ ຫຼັງ ແລະ ໄດ້ຕັກເຕືອນ ພວກນາງທັງສອງ ບໍ່ໃຫ້ຈອງກຳຈອງເວນແກ່ກັນ ແລະ ກັນຕໍ່ໄປ ໂດຍພະອົງໄດ້ກ່າວວ່າ "ການຜູກກຳຈອງເວນກັນນີ້ ຍ່ອມບໍ່ແລ້ວກັນເປັນຈັກເທື່ອ ເໝືອນ ໝູກັບແມວ, ງູກັບຈອນຟອນ ດັ່ງນີ້;ສ່ວນເວນນັ້ນ ຈະລະງັບລົງດ້ວຍການບໍ່ຜູກ ເວນຕໍ່ກັນ". ເມື່ອ ພະພຸດທະເຈົ້າເທດສະໜາຈົບລົງ ນາງທັງສອງກໍຍິນດີປະຕິບັດຕາມ ແລະ ທັງຮັກສາສິນ. ພະພຸດທະເຈົ້າໄດ້ ບອກໃຫ້ນາງກຸຣະທິດາ ເອົານາງຍັກຂິນີໄປລ້ຽງ ໄວ້. ທັງສອງຜົວເມຍກໍຮັບເອົານາງຍັກຂິນີມາລ້ຽງ ໂດຍໄດ້ໄປ ປຸກທຳໃຫ້ຢູ່ກາງນາທີ່ ພວກເຮົາ ເອີ້ນກັນວ່າ "ຜີຕາແຮກ" ນາງຍັກຂິນີ ກໍຍິນດີໄປຢູ່. ນາງຍັກຂິນີນັ້ນ ເປັນຜູ້ຮູ້ດີ ກ່ຽວກັບດິນຟ້າອາກາດ  ປີໃດຝົນຈະຕົກຫຼາຍ ກໍ ບອກໃຫ້ນາງກຸຣະທິດາ ໄປເຮັດນາໂພນ, ປີໃດຝົນຈະແລ້ງ ກໍບອກໃຫ້ ນາງ ກຸຣະທິດາ ໄປເຮັດນາໜອງ. ສະນັ້ນ ນາງກຸຣະທິດາ ເຮັດນາໄດ້ເຂົ້າ ຫຼາຍທຸກປີ. ເມື່ອຄົນທັງຫຼາຍເຫັນ ດັ່ງນັ້ນ ກໍເອົາອາຫານຕ່າງໆມາລ້ຽງ ນາງຍັກຂິນີ ແລ້ວ ນາງຍັກກໍບອກເລື່ອງດິນຟ້າອາກາດໃຫ້ແກ່ຄົນທັງຫຼາຍ. ເມື່ອຄົນທັງ ຫຼາຍເຮັດນາໄດ້ເຂົ້າຫຼາຍທຸກປີ ກໍພາກັນເອົາອາຫານຕ່າງໆມາລ້ຽງນາງຍັກຂິນີ ຫຼາຍຂຶ້ນເຮັດໃຫ້ນາງ ມີອາຫານການກິນຢ່າງລົ້ນເຫຼືອ. ສະນັ້ນ ນາງຈຶ່ງແບ່ງ ຖວາຍທານ ໃຫ້ແກ່ພະພິຂຸສົງ ໂດຍເຮັດເປັນສະຫຼາກ ອົງໃດມາຮັບກ່ອນ ກໍໃຫ້ ຫໍ່ທີ 1, ອົງ ມາທີ 2 ກໍໃຫ້ຮັບຫໍ່ທີ 2 ເປັນລຳດັບໄປ. ໃນເມື່ອມີພະສົງມາຮັບພ້ອມກັນຫຼາຍໆອົງ ກໍໃຫ້ຈັບສະຫຼາກ ເອົາ ອົງໃດຖືກເລກໃດ ກໍຖວາຍໃຫ້ຕາມເລກນັ້ນ. ດ້ວຍເຫດນີ້ພວກເຮົາຈຶ່ງໄດ້ເຮັດບຸນ ຫໍ່ເຂົ້າສະຫຼາກ ໂດຍຖືເອົາຕາມ ການປະຕິບັດການຖວາຍທານຕາມ ນາງຍັກຂິນີສືບຕໍ່ ມາຈົນເທົ່າທຸກວັນນີ້ແລ.

ວັດຖຸທານ" ຢູ່ໃນກວາຍ ມີ ສີໄຄ, ຕົ້ນຂີງ, ຕົ້ນຂ່າ,  ໝາກອຶ, ໝາກກ້ຽງ, ໝາກບົກ, ໝາກຂຽບ, ເຂົ້າຕົ້ມ, ເຂົ້າໜົມ, ເຂົ້າຕອກແຕກ, ຄຳໝາກ ຄຳພູ ກອກຢາ,…. ດອກບົວຫຼວງ ທູບທຽນ. ດອກໄມ້ທີ່ເພິ່ນມັກນຳໃຊ້ ເຂົ້າໃນພິທີບຸນເຂົ້າສະຫຼາກ ກໍແມ່ນ ດອກໄມ້ທີ່ມີສີຂາວ ເປັນສ່ວນຫຼາຍ ດັ່ງ ດອກພຸດ, ດອກອິນທະຫວາ, ດອກຊ້ອນ, ແລະ ສີອື່ນເຊັ່ນວ່າ: ດອກດາວເຮືອງ …. ດັ່ງນີ້ເປັນຕົ້ນ ສຳລັບໃສ່ຂັນຫ້າ ຂັນແປດ, ໃສ່ບ້າງ ໃສ່ຊວຍ, ເອ້ໝາກເບັງ. ພິເສດ ດອກໄມ້ທີ່ຊາວພຸດມັກໃສ່ໃນບາດສະຫວັນ ໃນໂອກາດບຸນນີ້ ແລະ ບູຊາພະ ແມ່ນ ດອກບົວຫຼວງ.






ຮູບ 3: ວັດຖຸທານໃສ່ໃນກວາຍ

1 ຂ່າ
2 ຂີງ
3 ຫົວສີໄຄ
4 ອ້ອຍ
5 ຫມາກບົກ
6 ຖົ່ວດິນ
7 ປາ
8 ຊີ້ນແຫ້ງ
9 ຫມາກນໍ້າ
10 ເຜືອກ
11 ຫມາກອຶ
12 ມັນດ້າງ
13 ເຄື່ອງຄຳຫມາກ
14 ເຂົ້າເປືອກ ແລະ ເຂົ້າຕອກແຕກ
15 ຫມາກກ້ວຍ
16 ຫົວກອຍ
17 ຫມາກເຄັງ
18 ຫມາກສີດາ
19 ຫມາກສົ້ມມໍ
20 ຫມາກຂ້າມປ້ອມ
21 ຫມາກຈັບ
22 ຫມາກຄໍ້ຂຽວ



## ບຸນອອກພັນສາ

ຄຳວ່າ ອອກພັນສານັ້ນ ໄດ້ແກ່ການອະນຸຍາດ ໃຫ້ພະພິກຂຸສົງອອກຈາກເຂດຈຳກັດ ຫຼັງຈາກການເຂົ້າຈຳພັນສາ ຄົບ 3 ເດືອນ ເພື່ອອອກໄປປະຕິບັດໜ້າທີ່ ຢູ່ບ່ອນອື່ນໄດ້ ເອີ້ນອີກຢ່າງໜຶ່ງວ່າ ການອອກຈາກລະດູຝົນ. ເມື່ອເຖິງມື້ຂຶ້ນ14 ຄ່ຳຂອງເດືອນ 11 ຊາວພຸດ ທັງຫຼາຍພາກັນຈັດຫາວັດຖຸທານຕ່າງໆມາໄວ້ຖວາຍທານຕາມກຳລັງສັດທາຂອງຕົນ. ເມື່ອເຖິງມື້ເພັງ 15 ຄ່ຳ ເດືອນ 11 ເວລາ 7 ໂມງເຊົ້າ ຊາວພຸດທັງຫຼາຍກໍມາເຕົ້າໂຮມກັນຖວາຍຂອງທານ ທີ່ໄດ້ກະກຽມໄວ້ ດ້ວຍການຕັກບາດຢູ່ໃນວັດພ້ອມທັງຖວາຍຜ້າຈີວອນ ຫຼື ຜ້າຈຳນຳພັນສາໃຫ້ແກ່ພະພິກຂຸສົງ. ດັ່ງນັ້ນ ວັນນີ້, ມື້ເພັງ 15 ຄ່ຳຂອງເດືອນ 11 ຖືວ່າ ແມ່ນມື້ສະເຫຼີມສະຫຼອງ ການອອກຈາກການຈຳພັນສາຄົບ 3 ເດືອນ ຂອງພະພິກຂຸສົງ. ຕາມປະເພນີລາວແຕ່ເກົ່າແລ້ວ ເວລາໃກ້ຈະຮອດວັນບຸນອອກພັນສາ ຊາວບ້ານ ໄດ້ກະກຽມເຮັດໝາກກະໂພກ ແລະ ບັ້ງໄຟດອກ ໂດຍນຳໃຊ້ຂີ້ໝື້ ຂີ້ເຈຍ ມາຕຳປະສົມກັນ ໃຫ້ເປັນເຊື້ອເພີງ ແລະ ນຳມາຫໍ່ດ້ວຍໃບລານແຫ້ງ. ພໍຕົກຄ່ຳມາຂອງມື້ເພັງ ຊາວບ້ານກໍພາກັນມາເຕົ້າໂຮມກັນຢູ່ວັດອີກ ເພື່ອພ້ອມກັນສ້າງເຮືອໄຟໂຄກ, ວຽນທຽນ, ຈູດໝາກກະໂພກ, ຈູດບັ້ງໄຟດອກ ແລະ ໄຕ້ໄຟບູຊາຄຸນ ພະພຸດ ພະທຳ ແລະ ພະສົງ. ນອກຈາກນັ້ນ ແຕ່ລະຄອບຄົວ ຍັງໄດ້ສ້າງເຮືອໄຟໂຄກຢູ່ທີ່ບ້ານເຮືອນຂອງໃຜລາວເພື່ອບູຊາ ຄຸນ ພະພຸດ ພະທຳ ແລະ ພະສົງ. ອີກຢ່າງໜຶ່ງທີ່ຊາວບ້ານໄດ້ກະກຽມ ແມ່ນເຮືອໄຟນ້ຳ ເຊິ່ງປົກກະຕິແມ່ນສ້າງຂຶ້ນໃນຕອນບ່າຍຂອງມື້ເພັງເອງ. ບາງບ້ານກໍ ເຮັດແບບງ່າຍດາຍ ຈາກທ່ອນກ້ວຍເປັນຕົ້ນຕໍ ເສີມດ້ວຍແຜ່ນໄມ້ນ້ອຍໆ ເປັນຮູບຍາວ ຄ້າຍຮູບເຮືອ ເຊິ່ງເພິ່ນເອົາມັດຍອງໃສ່ແພທ່ອນກ້ວຍ.ຈາກນັ້ນ ເພິ່ນເອົາຕົ້ນກາລະພຶກຕັ້ງໄວ້ ຢູ່ເທິງກາງຂອງແຜ່ນໄມ້ ແລ້ວຈຶ່ງໄຕ້ກະບອງ ລຽນໃສ່ເຮືອໄຟ ເພື່ອໃຫ້ແນມເຫັນແສງໄຟໃນຄືນວັນເພັງ ແລະ ແລ້ວຊາວບ້ານກໍ່ພ້ອມກັນອະທິດຖານຕ່າງໆນາໆ ເຊັ່ນວ່າ ຂໍໃຫ້ຊີວິດມີຄວາມສຸກ ປັດສະຈາກໂລກໄພໄຂ້ເຈັບ, ປະສົບຜົນສຳເລັດໃນໜ້າທີ່ການງານ, ແລະ ອື່ນໆ ແລ້ວກໍປ່ອຍເຮືອໄຟອອກສູ່ແລວນ້ຳ, ເພິ່ນເອີ້ນຂະບວນການນີ້ວ່າ “ການໄຫຼເຮືອໄຟ”. ອີກບາງບ້ານ ກໍເຮັດດ້ວຍໄມ້ໃຜ່ ມັດເຂົ້າກັນເປັນຮູບຊົງເຮືອໃຫຍ່ມີການກະກຽມຫຼາຍວັນ. ຢູ່ຕາມລຳນ້ຳ ຖ້າວ່າ ຜູ້ໃດຫາກ ລັດເອົາເຮືອໄຟດັ່ງກ່າວໄດ້ຕົ້ນກາລະພຶກ ກໍຈະເປັນຂອງຜູ້ນັ້ນ ເຊິ່ງເປັນຜູ້ມີໂຊກໄຊ ເຫຼືອຫຼາຍ, ມີຄວາມເຊື່ອວ່າຄອບຄົວຂອງ ຜູ້ນັ້ນ ຈະມີຊີວິດ ທີ່ປັດສະຈາກໂລກໄພ ໄຂ້ເຈັບທັງຫຼາຍທັງປວງໃນປີນັ້ນ. ແຕ່ ຢູ່ໃນຕົວເມືອງໃນປັດຈຸບັນ ໂດຍສະເພາະ ຊາວໜຸ່ມໄດ້ນຳເອົາກະໂທງ ເຮັດດ້ວຍທ່ອນກ້ວຍ ປະດັບປະດາດ້ວຍ ທູບທຽນ ແລະ

ຮູບ 1: ທ້າວສຸພັດທະ  ຖວາຍຜ້າຈີວອນ



ດອກໄມ້ ເຊິ່ງແມ່ນຮູບແບບປະຍຸກໃໝ່ ໄປລອຍນ້ຳ ຫຼັງຈາກທີ່ໃຫ້ພະສູດ ແລະ ວຽນທຽນຢູ່ໃນວັດແລ້ວ ພ້ອມທັງ ອະທິຖານຕ່າງໆນາໆ, ເອີ້ນຂະບວນການນີ້ວ່າ "ການລອຍກະໂທງ". ພໍຮອດມື້ຕໍ່ມາ ມື້ແຮມ 1 ຄ່ຳ ກໍມີການຈັດຊ່ວງເຮືອລະຫວ່າງ ຊຸມຊົນຕ່າງໆ ແລະ ຄຶບຶ້ນກັນຕາມປະເພນີ ຕະຫຼອດທັງຄືນ. ຈຸດປະສົງ ຂອງການຊ່ວງ ເຮືອ ແລະ ການໄຫຼເຮືອໄຟ ແມ່ນເພື່ອສົມມາຄາລະວະ ພ້ອມທັງບວງສວງຂໍໂຊກ ຂໍລາບຈາກ ພະຍານາກ ແລະ ເທວະດາ ອົງທີ່ໄດ້ປົກປັກຮັກສາ ແມ່ນ້ຳ ລຳເຊ ຕະຫຼອດຮອດຫ້ວຍຮ່ອງຄອງບຶງ ບ່ອນທີ່ຊາວພຸດທັງຫຼາຍໄດ້ທຳມາຫາກິນຢ່າງ ສະຫງົບສຸກແຕ່ບູຮານນະການມາ. ການທີ່ພວກຊາວພຸດທັງຫຼາຍ ແຫ່ວຽນທຽນ, ເຮັດເຮືອໄຟໂຄມ ແລະ ໄຕ້ທູບ ໄຕ້ທຽນ... ແມ່ນຖືເອົາຕາມແບບຢ່າງຂອງເທບ ພະບຸດ ແລະ ເທບພະທິດາທັງຫຼາຍ ທີ່ແຫ່ພະສຳມາສຳພຸດທະເຈົ້າ ເມື່ອຄັ້ງພະອົງ ສະເດັດຈາກຊັ້ນດາວະດຶງ ຄືໝາຍເຖິງເມືອງສະຫວັນຊັ້ນຟ້າ ລົງມາສູ່ເມືອງ ມະນຸດ ໃນມື້ແຮມ 1 ຄ່ຳ ເດືອນ 11, ລົງມາຕາມຂັ້ນໄດແກ້ວ, ຂັ້ນໄດຄຳ ແລະ ຂັ້ນໄດເງິນ. ພະອົງສະເດັດ ລົງຕາມຂັ້ນໄດຄຳ, ສ່ວນ ເທບພະບຸດ ເທບພະທິດາ ແລະ ສາວົກທັງຫຼາຍ ແມ່ນ ລົງຕາມຂັ້ນໄດເງິນ ແລະ ຂັ້ນໄດແກ້ວ ທີ່ຕັ້ງຢູ່ສອງຟາກຂ້າງ ຂອງຂັ້ນໄດຄຳ. ການແຫ່ພະອົງໃນຄັ້ງນັ້ນ ເປັນຂະບວນການແຫ່ ທີ່ຍິ່ງໃຫຍ່ ແລະ





ຕະຫຼອດເສັ້ນທາງ ພະອົງມີລັດສະໝີເປັ່ງປະກາຍສະຫວ່າງ ສະໄຫວໄປທົ່ວໂລກ ເຮັດໃຫ້ເທບພະບຸດ ເທບທິດາ ທີ່ຢູ່ເມືອງສະຫວັນຊັ້ນຟ້າ, ມະນຸດ ທີ່ຢູ່ໃນໂລກຂອງມະນຸດ ແລະ ສັດນະຣົກທຸກປະເພດ ທີ່ຢູ່ຊັ້ນຕ່ຳສຸດ ໄດ້ເຫັນແຈ້ງສະພາບຂອງກັນ ແລະ ກັນໝົດ. ດັ່ງນັ້ນ ພວກເຮົາຊາວພຸດທັງຫຼາຍ ໂດຍຖືເອົາຕາມຄວາມເຊື່ອ ທີ່ມີມາແຕ່ກ່ອນນັ້ນ ມາປະຕິບັດກັນ ຈົນເປັນປະເພນີ ສືບຕໍ່ກັນມາເທົ່າທຸກວັນນີ້ແລ. ດອກໄມ້ທີ່ເພິ່ນມັກນຳໃຊ້ ເຂົ້າໃນພິທີບຸນອອກພັນສາ ແມ່ນດອກໄມ້ທີ່ມີສີຂາວ ເປັນສ່ວນຫຼາຍ ດັ່ງ ດອກພຸດ, ດອກອິນທະຫວາ, ດອກຊ້ອນ ແລະ ສີອື່ນເຊັ່ນ: ດອກດາວເຮືອງ .... ດັ່ງນີ້ເປັນຕົ້ນ ສຳລັບໃສ່ຂັນຫ້າ ຂັນແປດ, ໃສ່ບ້າງ ໃສ່ຊວຍ, ເອ້ໝາກເບັງ, ເອ້ກະໂທງ, ສ່ວນວ່າ ດອກບົວຫຼວງ ແມ່ນເພິ່ນນຳໃຊ້ ບູຊາພະ ແລະ ໃສ່ໃນບາດສະຫວັນເທົ່ານັ້ນ.







ຮູບ 2: ຮູບເຮືອໄຟໂຄກ
ຮູບ 3: ຮູບກະໂທງ ທີ່ຕຽມຈະນຳໄປລອຍນ້ຳ
ຮູບ 4: ດອກໄມທີ່ໃຊ້ໃນບຸນອອກພັນສາ ດອກດາວເຮືອງ, ດອກບົວ ແລະ ດອກຈຳປາ
ຮູບ 5: ດອກອິນທະວາ ແລະ ດອກພຸດ

## ພິທີງານສົບ

ແມ່ນພິທີການຢ່າງໜຶ່ງທາງສາສະໜາ ທີ່ຈັດຂຶ້ນເພື່ອລະນຶກເຖິງ ແລະ ໃຫ້ກຽດແກ່ຜູ້ທີ່ເສຍຊີວິດ ຫຼື ຕາຍຈາກໄປ. ໂດຍອີງຕາມຄວາມເຊື່ອ ແລະ ຮີດຄອງປະເພນີທີ່ໄດ້ເຄີຍປະຕິບັດຜ່ານມາແຕ່ບູຮານນະການ ການນັບຖື ແລະ ໃຫ້ກຽດແກ່ຜູ້ທີ່ເສຍຊີວິດໄປແລ້ວ ແມ່ນຕ້ອງໄດ້ຄຳນຶງເຖິງເລື່ອງ ລະດັບຂອງການຈັດງານ, ສິ່ງທີ່ຈະເກັບໄວ້ ເປັນທີ່ລະລຶກ ເຊັ່ນ ທາດທີ່ຈະມາບັນຈຸກະດູກ, ການສູດສົບ ແລະ ອື່ນໆ, ແຕ່ອີກດ້ານໜຶ່ງ ກໍແມ່ນຂຶ້ນກັບເສດຖະກິດຂອງຄອບຄົວດັ່ງກ່າວ. ຮີດຄອງປະເພນີເຫຼົ່ານີ້ ອາດແຕກຕ່າງກັນໄປລະຫວ່າງ ສາສະໜາ, ຮີດຄອງປະເພນີ ແລະ ວັດທະນະທຳທີ່ແຕກຕ່າງກັນ.

ອີງຕາມທາງສາສະໜາພຸດ ໂດຍສະເພາະຊາວລາວສ່ວນໃຫຍ່ ແມ່ນຈັດງານສົບຢູ່ທີ່ບ້ານຂອງຜູ້ເສຍຊີວິດເອງ ເອີ້ນເຮືອນນັ້ນ ວ່າ “ເຮືອນດີ“. ຂັ້ນຕອນ ທີ່ປະຕິບັດກັບຜູ້ເສຍຊີວິດ ກໍແມ່ນເລີ່ມຕົ້ນ ດ້ວຍການເອົາຂອງມີຄ່າ ເຊັ່ນ ແກ້ວ ແຫວນ ເງິນ ຄຳມາໃສ່ປາກໃຫ້ ເພາະເຊື່ອວ່າ ຜູ້ກ່ຽວຈະໄດ້ຖືເອົາຕິດໂຕໄປນຳໃຊ້ຢູ່ໃນໂລກຂອງຜູ້ກ່ຽວ, ຈະບໍ່ໄດ້ທຸກຍາກ ຂາດເຂີນທາງດ້ານຊັບສິນ. ຫຼັງຈາກນັ້ນ ກໍທຳຄວາມສະອາດສົບ, ນຸ່ງເຄື່ອງໃໝ່ໃຫ້ ແລະ ມັດມືເຂົ້າກັນ ພ້ອມດອກໄມ້ທູບທຽນ ແລ້ວຈຶ່ງນຳສົບວາງນອນລົງໃນຫີບໄມ້ ຫຼື ເອີ້ນວ່າ “ຫີບສົບ” ທີ່ມີຢາດູດປູພື້ນ ເພື່ອດູດຊັບເອົາກິ່ນທັງມວນ ແລະ ເສື່ອໝອນທີ່ນອນ ພ້ອມທັງເຄື່ອງໃຊ້ສອຍເລັກນ້ອຍປະຈຳໂຕເພິ່ນທີ່ເພິ່ນມີຄວາມຜູກພັນເປັນພິເສດ. ສຸດທ້າຍຈຶ່ງເອົາໂລງສົບມາປົກຫຸ້ມໄວ້. ໂລງສົບຈະຖືກປະດັບປະດາດ້ວຍກະດາດ ສີເຫຼື້ອມ ເຊິ່ງແກະສະລັກ ໃຫ້ເປັນລວດລາຍໃນຮູບແບບຕ່າງໆ ຢ່າງສວຍງາມ. ຈາກນັ້ນ ໃນແຕ່ລະມື້ ການປະດັບໂລງສົບກໍເປັນກິດຈະກຳປະຈຳວັນ ຂອງຍາດຜູ້ໃກ້ຊິດ ດັ່ງມີໝາກເບັງແຊມດ້ວຍດອກໄມ້, ແລະແຈກັນດອກໄມ້ ຕັ້ງໄວ້ ອ້ອມຮອບ ໂລງສົບ ແລະ 4 ມຸມ. ຍາດຕິພີ່ນ້ອງ, ເພື່ອນມິດສະຫາຍຂອງຜູ້ເສຍຊີວິດ ກໍຈະສ້າງ “ກັນເງິນ” ຕາມແຕ່ສັດທາ ຂອງແຕ່ລະຄົນ ແລະ ຍັງມີຜ້າໄກ (ຜ້າໄຕຈີວອນ) ເພື່ອຖວາຍທານ ອຸທິດສ່ວນບຸນກຸສົນໃຫ້ແກ່ຜູ້ທີ່ເສຍຊີວິດອີກ.

ຕາມປົກກະຕິ ເພິ່ນຈະຈັດພິທີຄົບງັນສົບໄວ້ປະມານ 2-8 ວັນ ແລ້ວແຕ່ຄວາມສະດວກຂອງຄອບຄົວ. ໃນລະຫວ່າງນີ້ ກໍຈະມີການນິມົນຄູບາມາສູດ ຕະຫຼອດໄລຍະສົບ



ຮູບ 1: ພິທີສູດສົບ

ຍັງຢູ່ເຮືອນ. ໃນແຕ່ລະວັນ ກໍຈະມີການແຕ່ງບ້າງ, ໃນແຕ່ລະບ້າງ ມີດອກໄມ້ 1ຄູ່, ທຽນ 1 ຄູ່ ແລະ ເງິນ, ແລະ ຂັນໝາກ ເພື່ອຖວາຍທານ. ການໃສ່ເງິນໃນບ້າງແຕ່ລະວັນ ແມ່ນໃສ່ເພີ່ມຂຶ້ນເລື້ອຍໆ ເພື່ອເປັນສີລິມົງຄຸນ. ແຕ່ລະວັນ ກໍຕ້ອງມີພາເຂົ້າມາຕັ້ງໄວ້ເບື້ອງຫົວໂລງ ໃຫ້ແກ່ຜູ້ເສຍຊີວິດ. ຊາວພຸດ ເຊື່ອວ່າ ຖ້າຍັງບໍ່ທັນມີການປົງສົບ ແລະ ແຈກທານ ວິນຍານຂອງຜູ້ທີ່ເສຍຊີວິດ ກໍຍັງບໍ່ທັນໜີໄປໃສ ຍັງວົນວຽນຢູ່ທີ່ເດີມ, ດັ່ງນັ້ນຈຶ່ງມີການແຕ່ງພາເຂົ້າໃຫ້ຜູ້ເສຍ ຄືດັ່ງຜູ້ເສຍຮ່ວມກິນນຳຍາດຕິພີ່ນ້ອງປົກກະຕິຢູ່.

ເມື່ອຄົບກຳໜົດ ທີ່ໄດ້ຄາດໄວ້ ກໍຈະມີພິທີການອີກຢ່າງໜຶ່ງ ຄືພິທີການປົງສົບເຊິ່ງໝາຍເຖິງການແຫ່ສົບໄປເຜົາ ຫຼື ຝັງ ເພື່ອສົ່ງດວງວິນຍານ ຂອງ ຜູ້ຕາຍ ໄປສູ່ອີກໂລກໜຶ່ງ ເຊິ່ງເຊື່ອກັນວ່າ ເປັນໂລກທີ່ມີແຕ່ຄວາມສຸກ. ໃນຂະບວນແຫ່ສົບນີ້ ຜູ້ທີ່ເປັນລູກຫຼານຍາດຕິພີ່ນ້ອງ ກໍຈະບວດຈູງ.  ຜູ້ຊາຍກໍບວດ ເປັນຈົວ ຫຼື ບວດຂາວ; ສຳຫຼັບຜູ້ຍິງ ກໍບວດຊີ ຫຼື ບວດຂາວ, ເຊິ່ງເປັນຄວາມເຊື່ອວ່າ ນັກບວດ ສາມາດຈູງນຳທາງ ຫຼື ສົ່ງຜູ້ເສຍຂຶ້ນສູ່ສະຫວັນ ຊັ້ນຟ້າໄດ້, ຍິ່ງມີລູກຫຼານບວດຈູງຫຼາຍເທົ່າໃດ ການໄປສູ່ສະຫວັນຊັ້ນຟ້າ ກໍຍິ່ງສະດວກ. ຢູ່ໃນຂະບວນແຫ່ຈະມີ ພະ ຫຼື ຄູບາ ນຳໜ້າຂະບວນ ແລະ ຕາມມາດ້ວຍຈົວ, ແມ່ຊີ ທີ່ບວດໃໝ່ ແລະ ຍາດຕິພີ່ນ້ອງ ເພື່ອນມິດສະຫາຍ. ທຸກໆຄົນ ທີ່ໄປຮ່ວມຂະບວນແຫ່ສົບໄປປ່າຊ້າ (ຍົກເວັ້ນຜູ້ເປັນພະ) ຕ້ອງໄດ້ຖືຊວຍດອກຢີ່ໂຖ ຫຼື ໃບຂອງມັນ ຕິດໂຕໄປນຳ ເພື່ອເປັນສັນຍາລັກວ່າ ບໍ່ແມ່ນພວກດຽວກັນກັບກຸ່ມຄົນຜູ້ທີ່ເສຍຊີວິດໄປແລ້ວ ແລະ ແຕ່ລະຄົນ ກໍຖືຂອງແຂງຕິດຕົວໄປນຳ, ຢູ່ຊົນນະບົດຊາວບ້ານ ຖ້າແມ່ນຜູ້ຍິງ ມັກເອົາມີດນ້ອຍ ທີ່ຕົນເອງເອົາໄປແຕ່ເຮືອນເພື່ອຊ່ວຍວຽກຢູ່ເຮືອນດີ ເໜັບໃສ່ເກົ້າຜົມໄປເລີຍ ປະຕິບັດກັນມາແບບນີ້ ເພາະມີການເຊື່ອວ່າກຸ່ມຜູ້ຕາຍກ່ອນຈະມາຮັບຕ້ອນວິນຍານ ຂອງຜູ້ເສຍໃໝ່ຈະບໍ່ຫຼົງ. ຊວຍດອກຢີ່ໂຖ ຫມາຍຄວາມວ່າບໍ່ເປັນພວກດຽວກັນກັບຜູ້ ເສຍຊີວິດໄປແລ້ວ. ກ່ອນການເຜົາກໍຕ້ອງມີພິທີທາງສາສະໜາກ່ອນຈຶ່ງເຜົາສົບໄດ້.

ຫຼັງຈາກປົງສົບແລ້ວ ມື້ທີສອງ ແມ່ນມື້ທ້າງຫາກະດູກ ເພື່ອແຈກທານຫາຜູ້ຕາຍ ແລະ ເກັບກະດູກຂອງຜູ້ຕາຍພ້ອມໃນວັນນັ້ນ. ໃນມື້ທ້າງຫາກະດູກນີ້ ພີ່ນ້ອງທັງຫຼາຍກໍພາກັນມາຫໍ່ເຂົ້າຕົ້ມ ທ້າງຫາເຄື່ອງຂອງຕ່າງໆ ເພື່ອຖວາຍທານ. ສ່ວນກະດູກ ທີ່ເກັບແລ້ວນັ້ນ ກໍເຮັດພິທີນຳເຂົ້າບັນຈຸໄວ້ໃນທາດ ເພື່ອໃຫ້ລູກຫຼານ ສາມາດໄດ້ກາບໄຫວ້. ມື້ທີ່ສາມ ເພິ່ນເອີ້ນວ່າ “ມື້ແຈກ”, ໃນມື້ນີ້ ເປັນມື້ຖວາຍຂອງທານ ເພື່ອອຸທິດສ່ວນບຸນກຸສົນໄປໃຫ້ແກ່ຜູ້ຕາຍ, ພ້ອມກັນນັ້ນ ກໍຈັດຕຽມພາເຂົ້າ ເພື່ອອຸທິດໃຫ້ດວງວິນຍານຂອງຜູ້ຕາຍ ເຊິ່ງຈະນຳໄປໄວ້ໃຕ້ຕົ້ນໄມ້. ຫຼັງຈາກພິທີຖວາຍຂອງທານສຳເລັດແລ້ວ





ກໍມີການບາສີ ໃຫ້ແກ່ຄອບຄົວຂອງຜູ້ທີ່ເສຍຊີວິດ ເພື່ອປັດເປົ່າສິ່ງທີ່ເຄາະຮ້າຍ ທັງຫຼາຍທັງປວງ ແລະ ໃຫ້ມີແຕ່ໂຊກລາບ ແລະ ສຸຂະພາບແຂງແຮງໃນຕໍ່ໄປ. ຫຼັງຈາກນີ້ ພິທີງານສົບກໍເປັນອັນສິ້ນສຸດລົງ. ດອກໄມ້ ທີ່ໃຊ້ປະດັບປະດາໃນງານສົບເພິ່ນຈະເນັ້ນດອກສີຂາວ ເປັນສ່ວນຫຼາຍດັ່ງ ດອກພຸດ ສໍາລັບເອ້ໝາກເບັງ, ໃສ່ບ້າງ ໃສ່ຊວຍ, ດອກລີລາ ສໍາລັບໃສ່ແຈກັນເອ້ຢູ່ 4ແຈຂອງໂລງສົບ. ແຕ່ໃນປັດຈຸບັນການເອ້ກໍມີຫຼາຍຂຶ້ນຈໍາເປັນຈຶ່ງນໍາໃຊ້ດອກໄມ້ ຫຼາກຫຼາຍສີ ຕື່ມໃສ່ດອກສີຂາວຂ້າງເທິງ, ໄດ້ແກ່ ພວກດອກດາວເຮືອງ, ດອກເບັນຈະມາດ, ດອກຫຼັກເລ້, ດອກເຂັມ, ດອກສາມປີ,...
ດັ່ງນີ້ເປັນຕົ້ນ.











ຮູບ 2: ການກະກຽມເຜົາສົບ
ຮູບ 3: ຜ້າໄກ
ຮູບ 4: ຊຸດຂັນໝາກ
ຮູບ 5: ຊວຍໃບຢີ່ໂຖ
ຮູບ 6: ພາເຂົ້າຕັ້ງໃສ່ຫົວໂລງ ຜູ້ທີ່ເສັຍຊີວິດ
ຮູບ 7: ບ້າງ

## ສວນວັດ

ນັບແຕ່ບູຮານນະການມາ ຢູ່ໃນວັດຕ່າງໆ ເພິ່ນມັກປູກຕົ້ນໄມ້ ແລະ ດອກໄມ້ນານາຊະນິດ ເຊິ່ງເປັນກິດຈະກຳຂອງພະ ຫຼື ແມ່ຂາວ ທີ່ປະຈຳຢູ່ໃນວັດ. ຕົ້ນໄມ້ ທີ່ພວກເຮົາມັກເຫັນຢູ່ຕາມວັດ ໂດຍສະເພາະ ແມ່ນ ວັດທີ່ເກົ່າແກ່ຕາມຊົນນະບົດ ຈະເປັນຕົ້ນໄມ້ ທີ່ມີຂະໜາດຂ້ອນຂ້າງໃຫຍ່ ເຊັ່ນ ກ່ອນໝູ່ໝົດ ແມ່ນຕົ້ນໂພ, ຕໍ່ມາ ແມ່ນຕົ້ນຕານ. ຕົ້ນໂພ ເໝືອນວ່າຈະເປັນເອກກະລັກຂອງວັດໂດຍລວມ.
ຊາວພຸດທັງຫຼາຍ ຖືວ່າ ຕົ້ນໂພ ເປັນຕົ້ນໄມ້ ທີ່ສັກສິດ ມີອາຍຸຍືນ ແລະ ເຊື່ອວ່າພົວພັນກັບຊີວິດຂອງພະພຸດທະເຈົ້າ; ສະນັ້ນ ເພິ່ນມັກຈະມາໃສ່ເຂົ້າບູຊາ ຫຼື
ຢາດນ້ຳອະທິດຖານ
ຂໍພອນຢ່າງໃດຢ່າງໜຶ່ງ ຫຼັງຈາກຕັກບາດ ຫຼື ໃຫ້ທານແລ້ວ ຫຼື ນັ່ງສະມາທິຢູ່ກ້ອງຕົ້ນໂພ.
ນອກຈາກນັ້ນ ໃນວັດເກົ່າແກ່ ກໍມັກເຫັນເພິ່ນປູກຕົ້ນລານ ເຊິ່ງໃນສະໄໝກ່ອນ ເພິ່ນນຳໃຊ້ໃບລານ ແທນເຈ້ຍ ເພື່ອຂຽນໜັງສື, ໃຊ້ເຮັດໝາກກະໂພກ ຈູດບູຊາໃນຍາມບຸນອອກພັນສາ; ຮາກຂອງມັນ ຍັງຝົນດື່ມ ແກ້ຮ້ອນໃນໄດ້,ເຮັດໃຫ້ນ້ຳເຫື່ອລະບາຍອອກດີ ແລະ ແກ້ໄຂ້ຫວັດ. ຢູ່ໃນວັດບາງແຫ່ງ ກໍຍັງມີຕົ້ນໄມ້ ຫຼາຍຊະນິດຕື່ມອີກ, ບາງຊະນິດກິນໝາກໄດ້ກໍ່ມີ, ມີດອກສວຍງາມກໍ່ໄດ້ ແລະ ທັງນຳໃຊ້ເປັນຢາພື້ນເມືອງຮັກສາໂລກໄດ້ອີກດ້ວຍ ດັ່ງ  ຕົ້ນມູກ, ຕົ້ນໄຮ, ຕົ້ນພ້າວ, ຕົ້ນໝາກ, ຕົ້ນຝາງ ຫຼື ຕົ້ນຫາງຍຸງ, ຕົ້ນໝາກເຟືອງ, ຕົ້ນໝາກຂາມ; ຫຼຸດຂະໜາລົງມາ ແມ່ນ ຕົ້ນດອກຈຳປາ, ຕົ້ນໃບໜາດ, ຕົ້ນໝາກເຍົາ, ຕົ້ນໝາກຍໍ, ຕົ້ນກະຖິນ, ຕົ້ນຂີ້ຫູດ, ຕົ້ນຂີ້ເຫຼັກໃຫຍ່, ຫຍ້າໜວດແມວ, ຕົ້ນກ້າງປາ, ຕົ້ນໝາກສົ້ມພໍດີ, ຕົ້ນໝາກຫຸ່ງສາ, ຫວ້ານຫາງແຂ້, ຫ້ຍາໝາກກ້ອງໃບ, ຕົ້ນກະເພົາຂາວ ແລະ ກະເພົາແດງ,... ດັ່ງນີ້ ເປັນຕົ້ນ ເຊິ່ງເພິ່ນນຳໃຊ້ທັງໃບທັງຮາກ ຕົ້ມເປັນຢາ ຫຼາກຫຼາຍສັບພະຄຸນ  ປະສົມກັບພືດອື່ນຫຼາຍຊະນິດອີກ ແຕ່ທັງໝົດນີ້ ລ້ວນແຕ່ແມ່ນ ກຸ່ມພືດທີ່ມີສັບພະຄຸນ ທາງດ້ານຢາຫຼາຍກວ່າດ້ານອື່ນ, ມີກຸ່ມພືດໜຶ່ງຖືກນຳໃຊ້ ນວດເສັ້ນ ນວດເອັນ ບໍ່ໃຫ້ປວດເມື່ອຍ ໂດຍໃຊ້ອາບ, ໃຊ້ຄັ້ນທາທາງນອກ ຫຼື ປິ່ນປົວລະບົບທາງດ້ານໃນ ທັງໃຊ້ເປັນຢາບຳລຸງນຳອີກ.

ນອກຈາກນີ້ ເພິ່ນຍັງປູກຕົ້ນດອກໄມ້ໄວ້ມຸມໜຶ່ງຂອງວັດອີກ ເພື່ອຄວາມສວຍງາມ ແລະ ບາງຊະນິດ ກໍ່ເພື່ອນຳໃຊ້ດອກ ບູຊາພະ ປະດັບໝາກເບັງ, ເຮັດຂັນຫ້າ ຂັນແປດ ດັ່ງ  ຕົ້ນດອກພຸດ, ດອກດາວເຮືອງ, ດອກອິນທະຫວາ, ດອກຊ້ອນ, ຕົ້ນໃບເງິນ ໃບເງິນ ໃບຄຳ ແລະ ອື່ນໆ.



ຮູບ 1: ສ່ວນໜຶ່ງຂອງສວນວັດແຫ່ງໜຶ່ງ

ພືດຕ່າງໆ ທີ່ເພິ່ນປູກຢູ່ໃນວັດ ແມ່ນນອກຈາກຈະເຮັດໃຫ້ວັດ ເປັນສະຖານທີ່ໆຮົ່ມເຢັນໃຫ້ແກ່ຜູ້ທີ່ມາເພິ່ງພາ ແລ້ວຍັງເໝາະແກ່ການນັ່ງສຳມາທິຂອງປວງຊົນທັງຫຼາຍທີ່ຕ້ອງການປະຕິບັດທຳ ຈຳສິນ ແລະ ພະອາຈານໃຫຍ່ໃນວັດກໍຍັງນຳໃຊ້ເປັນຢາຮັກສາປົວພະຍາດ ໃຫ້ແກ່ອອກຕົນຍາດໂຍມ ທີ່ມາເພິ່ງພາ ເພາະວ່າສະໄໝກ່ອນ ຄົນທັງຫຼາຍຈະເພິ່ງພາຢາພື້ນເມືອງ ເປັນຕົ້ນຕໍ. ດັ່ງນັ້ນ ພາບທີ່ເຫັນໃນສວນວັດ ແມ່ນປ່າໄມ້ຕຶບໜາພໍສົມຄວນ; ຢູ່ຮົ່ມຂອງໄມ້ໃຫຍ່ ກໍຍັງມີ ໄມ້ນ້ອຍ ໄມ້ພຸ່ມ ຊອນກັນຂຶ້ນມາ ແລະ ມີໄມ້ເຄືອນ້ອຍຫ້ອຍປົນເຄືອໃຫຍ່ ປະປົນສົນສວ້າກັນ. ການມີຕົ້ນໄມ້ໃຫຍ່ນ້ອຍຫຼາກຫຼາຍຊະນິດປະປົນກັນນີ້ອາດເປັນເພາະວ່າ ພະອາຈານໃຫຍ່ ຫຼື ແມ່ຂາວ ແມ່ຊີທີ່ຮັບຜິດຊອບໜ້າວຽກນີ້ ໄດ້ນຳເອົາແນວພັນມາ ກໍແມ່ນປູກເອົາແນວໄວ້ໂລດ ເພື່ອໃຫ້ອອກຕົນຍາດໂຍມໄດ້ນຳໃຊ້ຕາມຈຸດປະສົງ ໝົດທຸກຢ່າງເລີຍ.









ຮູບ 2: ຫມາກເຟືອງ
ຮູບ 3: ຫຍ້າຫມາກກ້ອງໃບ
ຮູບ 4: ໝາກຂາມ
ຮູບ 5: ຕົ້ນໝາກ
ຮູບ 6: ຫຍ້າໜວດແມວ
ຮູບ 7: ໝາກຍໍ
ຮູບ 8: ໃບເງິນ ໃບຄຳ
ຮູບ 9: ຫມາກຕານ
ຮູບ 10: ຫມາກມ່ວງຫິມະພານ
ຮູບ 11: ຫມາກກະຖິນ
ຮູບ 12: ຫມາກນ້ຳນົມ
ຮູບ 13: ຫມາກຍົມ



















- ຄວາມຮູ້ຍ່ອມເກີດຂຶ້ນ ແກ່ຜູ້ສະແຫວງຫາ ຍ່ອມບໍ່ເກີດຂຶ້ນ ແກ່ຜູ້ກຽດຄ້ານ.
- ນົກບໍ່ມີຂົນ ຄົນບໍ່ມີຄວາມຮູ້ ຍ່ອມຂຶ້ນສູ່ທີ່ສູງບໍ່ໄດ້.
- ການມີຊີວິດຢູ່ໂດຍທີ່ບໍ່ສ້າງປະໂຫຍດຫຍັງໃຫ້ແກ່ສັງຄົມເຖິງແມ່ນວ່າຈະມີຊີວິດຢູ່ໄດ້ຮອດຮ້ອຍປີ ກໍ່ບໍ່ມີຄ່າເທົ່າກັບບຸກຄົນຜູ້ທີ່ສ້າງປະໂຫຍດໃຫ້ແກ່ສັງຄົມເຖິງແມ່ນວ່າເຂົາຈະມີຊີວິດຢູ່ໄດ້ພຽງວັນດຽວ.
- ປັນຍາເກີດຈາກຄວາມສະຫຼາດ ແລະ ຄວາມສະແຫວງຫານັ້ນແລ.



## Pha Tad Ke Botanical Garden

ສວນພຶກສາຊາດ ຜາຕັດແກ້ ຕັ້ງຢູ່ແຄມແມ່ນ້ຳຂອງ ທີ່ຫຼວງພະບາງ ເປັນສວນພຶກສາຊາດແຫ່ງທຳອິດຂອງ ສປປ ລາວ ໂດຍມີຈຸດປະສົງເຕົ້າໂຮມເອົາພັນພືດທີ່ເກີດຢູ່ໃນທຸກໆພາກຂອງລາວ ຊຶ່ງຊຸມຊົນຊາວລາວ ເຄີຍນຳໃຊ້ ຫຼື ມີຄວາມຜູກພັນມາແຕ່ຊ້ານານ ມາປູກ ແລະ ປົກປັກຮັກສາໄວ້ໃຫ້ຄົນລຸ້ນຫຼັງໄດ້ເຫັນ ແລະ ສຶກສາ ຄຽງຂ້າງກັບການປູກພັນພືດທີ່ມາຈາກແຫ່ງອື່ນ ເພື່ອເປັນການສ້າງສິ່ງເອື້ອອຳນວຍໃຫ້ແກ່ການຄົ້ນຄວ້າວິທະຍາສາດ, ອັນຈະເປັນສ່ວນປະກອບໃນການສຶກສາ ພຶກສາຊາດຂອງປະເທດລາວ ແລະ ຊີວະນານາພັນຂອງໂລກອີກດ້ວຍ.

***Pha Tad Ke Botanical Garden***

***Luang Prabang, Lao PDR***

***Published with the generous support from SDC***

Text: Asocc. Prof. Manichanh Sayavong

Drawings: Kongngern Sengdee

Graphic Design: Rik Gadella

© 2012, Pha Tad Ke Botanical Garden & the Authors

**www.pha-tad-ke.com**



ດອກໄມ້ທີ່ກຳລັງເບັ່ງບານ
ແສນສຳລານເມື່ອຍາມມີລົມຕ້ອງ
ຝູງແມ່ພວກພີ່ນ້ອງ
ທຸກຂົງເຂດໃຫ້ຄວາມຊື່ນຊົມ ແລະ
ຮັກຫອມຫຼາຍ
ມີທັງ ຍິງແລະຊາຍ
ພາກັນຮັກສາ ແລະ ປູກມັນເອົາໄວ້
ເພື່ອຈະໄດ້ໃຊ້ຜົນປະໂຫຍດ
ສັກກະລະບູຊາ

www.pha-tad-ke.com